**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ:________/ລບ

ນະຄອນຫຼວງວຽງຈັນ, ວັນທີ: ……………….

# (ຮ່າງ)

# ດຳລັດ

# ວ່າດ້ວຍທຸລະກິດຍານພາຫະນະ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ (ສະບັບປັງປຸງ) ສະບັບເລກທີ04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ສະບັບເລກທີ46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ການສະເໜີຂອງ ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ…………..., ລົງວັນທີ ………….

## ລັດຖະບານອອກດຳລັດ:

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການກ່ຽວກັບການຄຸ້ມຄອງ, ຕິດຕາມກວດກາການດຳເນີນທຸລະກິດການນຳເຂົ້າ-ສົ່ງອອກ, ຈຳໜ່າຍ, ຜະລິດ ແລະ ປະກອບຍານພາຫະນະຢູ່ ສປປ ລາວ ເພື່ອເຮັດໃຫ້ການດຳເນີນທຸລະກິດດັ່ງກ່າວຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການ, ແນໃສ່ປົກປ້ອງສິດ, ຜົນປະໂຫຍດຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້.

**ມາດຕາ 2 ທຸລະກິດຍານພາຫະນະ**

ທຸລະກິດຍານພາຫະນະ ແມ່ນການດຳເນີນທຸລະກິດກ່ຽວກັບການນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ຜະລິດ ແລະ ປະກອບຍານພາຫະນະ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ມີຄວາມໝາຍ ດັ່ງນີ້:

1. ຍານພາຫະນະ ໝາຍເຖິງ ພາຫະນະທຸກປະເພດທຸກຊະນິດທີ່ແລ່ນດ້ວຍເຄື່ອງຈັກ ທີ່ມີສອງລໍ້ຂຶ້ນໄປ;

2. ສະຖານທີ່ວາງຈຳໜ່າຍຍານພາຫະນະ ໝາຍເຖິງສະຖານທີ່ວາງສະແດງ ແລະ ຈຳໜ່າຍຍານພາຫະນະ;

3. ຊິ້ນສ່ວນຍານພາຫະນະ ໝາຍເຖິງສ່ວນປະກອບຂອງຍານພາຫະນະທີ່ນຳເຂົ້າ ຫຼື ຜະລິດ ເພື່ອປະກອບເປັນພາຫະນະທີ່ສົມບູນ ແລະ ສາມາດນຳໃຊ້ໄດ້;

4. ລູກຄ້າຂອງຕົນ ໝາຍເຖິງ ຜູ້ຊື້ຍານພາຫະນະຈາກບໍລິສັດນຳເຂົ້າ-ສົ່ງອອກ, ໂຮງງານຜະລິດ ຫຼື ປະກອບ, ຜູ້ຈຳໜ່າຍພາຍໃນ ເພື່ອຈຳໜ່າຍຕໍ່ຢູ່ ພາຍໃນ ຫຼື ສົ່ງອອກ ໂດຍມີສັນຍາ ຊື້-ຂາຍ ລະຫວ່າງຜູ້ຊື້ ແລະ ຜູ້ຂາຍ;

5. ເອັສເຄດີ ຂຽນຫຍໍ້ຈາກພາສາ ສາກົນ (SKD) ໝາຍເຖິງ ຊິ້ນສ່ວນຢູ່ໃນຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນບໍ່ລະອຽດໂດຍປະມານ 50% ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນ ທີ່ນຳເຂົ້າ ຫຼື ຜະລິດ ຢູ່ພາຍໃນ ເພື່ອປະກອບຍານພາຫະນະຢູ່ໂຮງງານ ໃນ ສປປ ລາວ;

6. ຊີເຄດີ ຂຽນຫຍໍ້ຈາກພາສາ ສາກົນ (CKD) ໝາຍເຖິງ ຊິ້ນສ່ວນ ຢູ່ໃນຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນລະອຽດ ຊຶ່ງເປັນຊິ້ນສ່ວນພໍໃຜພໍມັນທີ່ນຳເຂົ້າ ຫຼື ຜະລິດຢູ່ພາຍໃນ ເພື່ອປະກອບຍານພາຫະນະ ຢູ່ໂຮງງານໃນ ສປປ ລາວ ;

7. ໄອເຄດີ ຂຽນຫຍໍ້ຈາກພາສາສາກົນ (IKD) ໝາຍເຖິງ ຊິ້ນສ່ວນແຕ່ບໍ່ຄົບຊຸດຢູ່ໃນ ຮູບຮ່າງລັກສະນະທີ່ແກະ ແລະ ແຍກອອກຈາກກັນແບບ CKD ທີ່ນຳເຂົ້າ ຫຼື ຜະລິດ-ຕົບແຕ່ງ ຢູ່ພາຍໃນ ເພື່ອປະກອບຢູ່ໂຮງງານ;

8. ໃບມອບສິດຈາກບໍລິສັດແມ່ ໝາຍເຖິງ ໃບມອບລິຂະສິດຈາກບໍລິສັດແມ່ ທີ່ອະນຸຍາດໃຫ້ຜະລິດ ແລະ ປະກອບຍານພາຫະນະ ແລະ ຜະລິດ-ປະກອບຊິ້ນສ່ວນຂອງຍານພາຫະນະ.

## ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບທຸລະກິດທຸລະກິດຍານພາຫະນະ

ລັດຮັບຮູ້ ແລະ ປົກປ້ອງສິດໃນດຳເນີນທຸລະກິດພະຫະນະຂອງທຸກພາກສ່ວນເສດຖະກິດ ໃຫ້ດຳເນີນຕາມກົດໝາຍ ແລະ ລະບຽບການ.

ລັດອຳນວຍຄວາມສະດວກ ໃຫ້ແກ່ທຸລະກິດພາຫະນະຢ່າງເປັນເອກະລາດ ພາຍໃຕ້ກົດໝາຍ ໂດຍບໍ່ໃຫ້ພາກສ່ວນໃດໜຶ່ງຂອງລັດ ສ້າງອຸປະສັກ ຫຼື ຂັດຂວາງ.

ລັດສ້າງເງື່ອນໄຂ ແລະ ສ້າງຄວາມສາມາດ ໃຫ້ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃນການເຂົ້າຮ່ວມທຸລະກິດຍານພາຫະນະ.

ລັດຊຸກຍູ້ສົ່ງເສີມການຜະລິດພາຍໃນ ແລະ ດຶງດູດການລົງທຶນເຂົ້າໃນອຸດສາຫະກຳປຸງແຕ່ງ ກ່ຽວກັບກົນຈັກ ແລະ ຍານພາຫະນະ ຕາມທີ່ກຳນົດໄວ້ໃນ ມາດຕາ 43 ຂອງກົດໝາຍວ່າດ້ວຍອຸດຫະກຳປຸງແຕ່ງ.

ລັດຊຸກຍູ້ສົ່ງເສີມການຜະລິດ, ການນຳເຂົ້າຍານພາຫະນະທີ່ເປັນມິດກັບສິ່ງແວດລ້ອມ.

## ມາດຕາ 5 ຫຼັກການພື້ນຖານກ່ຽວກັບທຸລະກິດຍານພາຫະນະ

ການດຳເນີນທຸລະກິດຍານພາຫະນະ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ, ກົດໝາຍ ແລະ ລະບຽບການ;
2. ລັດຄຸ້ມຄອງ ແລະ ດັດສົມ ຫົວໜ່ວຍທຸລະກິດຍານພາະຫະນະ ຕາມກົນໄກຕະຫຼາດ ໃນແຕ່ລະໄລຍະ;
3. ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ຜູ້ດຳເນີນທຸລະກິດ ແລະ ຜູ້ຊົມໃຊ້;
4. ສອດຄ່ອງ ແລະ ຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

5. ສອດຄ່ອງກັບສັນຍາສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງພາຍໃນ ແລະ ຕ່າງປະເທດທີ່ດຳເນີນທຸລະກິດພາຫະນະຢູ່ ສປປ ລາວ.

## ພາກທີ II

## ປະເພດທຸລະກິດຍານພາຫະນະ

**ມາດຕາ 7 ປະເພດທຸລະກິດຍານພາຫະນະ**

ປະເພດທຸລະກິດຍານພາຫະນະມີ 3 ປະເພດຄື:

1. ທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະ;
2. ທຸລະກິດຈຳໜ່າຍຍານພາຫະນະ;
3. ທຸລະກິດການຜະລິດ ແລະ/ຫຼື ປະກອບຍານພາຫະນະ;

**ມາດຕາ 8 ທຸລະກິດການນຳເຂົ້າ ແລະ ສົ່ງອອກ ຍານພາຫະນະ**

ທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະ ແມ່ນການເຄື່ອນໄຫວທຸລະກິດ ກ່ຽວກັບການນຳເຂົ້າຍານພາຫະນະ ເພື່ອຂາຍຍົກ, ຂາຍຍ່ອຍ, ສົ່ງອອກຕໍ່, ຜ່ານແດນ, ເປັນຕົວແທນໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະຢູ່ ສປປ ລາວ ເພື່ອສົ່ງອອກໄປຕ່າງປະເທດ.

ຜູ້ດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກຍານພາຫະນະ ຕ້ອງໄດ້ຮັບມອບສິດໃຫ້ເປັນຜູ້ນຳເຂົ້າ ຫຼື ສົ່ງອອກ ຢ່າງເປັນທາງການຈາກຜູ້ຜະລິດ ຢູ່ພາຍໃນ ຫຼື ຕ່າງປະເທດ.

**ມາດຕາ 9 ທຸລະກິດຈຳໜ່າຍຍານພາຫະນະ**

ທຸລະກິດຈຳໜ່າຍຍານພາຫະນະ ແມ່ນການເຄື່ອນໄຫວທຸລະກິດກ່ຽວກັບການຂາຍຍົກ, ຂາຍຍ່ອຍຍານພາຫະນະໃໝ່ ແລະ ຍານພາຫະນະທີ່ນຳໃຊ້ແລ້ວ ຕາມເງື່ອນໄຂທີ່ກຳນົດໄວ້ໃນດຳລັດສະບັບນີ້.

ຜູ້ດຳເນີນທຸລະກິດຈຳໜ່າຍຍານພາຫະນະສາມາດຂາຍ ຫຼື ເປັນຕົວແທນຈຳໜ່າຍຍານພາຫະນະຍີ່ຫໍ້ໃດໜຶ່ງ ຫຼື ຫຼາຍຍີ່ຫໍ້ໄດ້ ແຕ່ບໍ່ສາມາດນຳເຂົ້າ ແລະ ສົ່ງອອກ.

**ມາດຕາ 10 ທຸລະກິດ ການຜະລິດ, ການປະກອບຍານພາຫະນະ**

ທຸລະກິດການຜະລິດ ແລະ/ຫຼື ປະກອບຍານພາຫະນະແມ່ນການເຄື່ອນໄຫວທຸລະກິດກ່ຽວກັບໂຮງງານທີ່ນຳເຂົ້າ ຫຼື ຊື້ຈາກບໍລິສັດຜະລິດຢູ່ພາຍໃນ ເພື່ອນຳຊີ້ນສ່ວນມາຜະລິດ ແລະ/ຫຼື ປະກອບເປັນຍານພາຫະນະ ເພື່ອຈຳໜ່າຍຢູ່ພາຍໃນ ຫຼື ສົ່ງອອກຕ່າງປະເທດ.

ທຸລະກິດການຜະລິດ ແລະ/ຫຼື ປະກອບຍານພາຫະນະສາມາດຂາຍຍົກໃຫ້ຜູ້ດຳເນີນທຸລະກິດຈຳໜ່າຍຢູ່ພາຍໃນ ແລະ ສາມາດສົ່ງອອກໂດຍກົງໄດ້.

# ພາກທີ III
# ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດຍານພາຫະນະ

## ໝວດທີ 1
## ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດການນຳເຂົ້າ- ສົ່ງອອກ ຍານພາຫະນະ

**ມາດຕາ 11 ຂັ້ນຕອນການສ້າງຕັ້ງ ແລະ ການເຄື່ອນໄຫວ ທຸລະກິດການນຳເຂົ້າ-ສົ່ງອອກ ຍານພາຫະນະ**

ການສ້າງຕັ້ງ ແລະ ການດຳເນີນທຸລະກິດການນຳເຂົ້າ-ສົ່ງອອກ ຍານພາຫະນະ ຕ້ອງປະຕິບັດຕາມ ຂັ້ນຕອນດັ່ງນີ້:

1. ແຈ້ງຂຶ້ນທະບຽນວິສາຫະກິດ;
2. ຂໍອະນຸຍາດປຸກສ້າງ ສະຖານທີ່ວາງຈຳໜ່າຍຍານພາຫະນະ;
3. ຂໍອະນຸຍາດເຄື່ອນໄຫວທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະ.

**ມາດຕາ 12 ເງື່ອນໄຂການຂຶ້ນທະບຽນວິສາຫະກິດຂອງທຸລະກິດການນຳເຂົ້າ ແລະ ສົ່ງອອກ ຍານພາຫະນະ**

ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດ ການນຳເຂົ້າ ແລະ ສົ່ງອອກຍານພາຫະນະ ຕ້ອງສ້າງຕັ້ງເປັນບໍລິສັດ ເພື່ອເຄື່ອນໄຫວສະເພາະຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

ການຂຶ້ນທະບຽນວິສາຫະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີທຶນຈົດທະບຽນ ຫ້າຕື້ (5.000.000.000) ກີບ ຂຶ້ນໄປ ແລະ ມີທຶນໝູນວຽນ ສອງຕື້ (2.000.000.000) ກີບ ຂຶ້ນໄປ;
2. ໄດ້ຮັບມອບສິດໃຫ້ເປັນຜູ້ນຳເຂົ້າ ຫຼື ສົ່ງອອກ ຢ່າງເປັນທາງການຈາກຜູ້ຜະລິດຍານພາຫະນະ ຢູ່ພາຍໃນ ຫຼື ຕ່າງປະເທດ;
3. ມີສະຖານທີ່ສຳລັບນຳໃຊ້ເປັນບ່ອນວາງຈຳໜ່າຍຍານພາຫະນະຕາມເງື່ອນໄຂທີ່ກຳນົດໄວ້ ໃນດຳລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 13 ການແຈ້ງຂຶ້ນທະບຽນວິສາຫະກິດຂອງທຸລະກິດການນຳເຂົ້າ ແລະ ສົ່ງອອກ ຍານພາຫະນະ**

ການແຈ້ງຂຶ້ນທະບຽນວິສາຫະກິດທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ແລະ ຕ້ອງປະກອບມີເອກະສານ ຕົ້ນຕໍດັ່ງນີ້:

1. ໜັງສື ຫຼື ເອກະສານຢັ້ງຢືນເຈດຈຳນົງການມອບສິດເປັນຕົວແທນຈຳໜ່າຍຍານພາຫະນະ;
2. ໃບຢັ້ງຢືນຖານະທາງດ້ານການເງິນຂອງຜູ້ສະເໜີສ້າງຕັ້ງວິສາຫະກິດຈາກທະນາຄານຢູ່ພາຍໃນ ຫຼື ຕ່າງປະເທດ;
3. ເອກະສານຢັ້ງຢືນສະຖານທີ່ຕັ້ງ ທີ່ຢັ້ງຢືນໂດຍອົງການປົກຄອງບ້ານ ສຳລັບນຳໃຊ້ເປັນສະຖານທີ່ວາງຈຳໜ່າຍຍານພາຫະນະ.

**ມາດຕາ 14 ການພິຈາລະນາຂຶ້ນທະບຽນວິສາຫະກິດຂອງທຸລະກິດນຳເຂົ້າ-ສົ່ງອອກ ຍານພາຫະນະ**

ພາຍຫຼັງໄດ້ຮັບເອກະສານແຈ້ງຂຶ້ນທະບຽນຄົບຖ້ວນ ແລະ ຖືກຕ້ອງ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາຂຶ້ນທະບຽນຢ່າງຊ້າ ບໍ່ເກີນ 15 ວັນລັດຖະການ.

ກໍລະນີບໍ່ເຫັນດີ ຂະແໜງອຸດສາຫະກາ ແລະ ການຄ້າ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ ໃຫ້ຜູ້ແຈ້ງຂຶ້ນທະບຽນ ຢ່າງຊ້າບໍ່ເກີນ 10 ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 15 ການຂໍອະນຸຍາດເຄື່ອນໄຫວທຸລະກິດການນໍາເຂົ້າ ແລະ ສົ່ງອອກຍານພາຫະນະ**

ພາຍຫຼັງໄດ້ໃບທະບຽນວິສາຫະກິດ ແລະ ປຸກສ້າງສະຖານທີ່ວາງຈໍາໜ່າຍຍານພາຫະນະສໍາເລັດ ຕາມ ເງື່ອນໄຂ ທີ່ກໍານົດໃນມາດຕາ 18 ຂອງດໍາລັດສະບັບນີ້ ໃຫ້ສະເໜີຕໍ່ຂະແໜງອຸດສາຫະກໍາ ແລະ ການຄ້າ ເພື່ອ ພິຈາລະນາ ອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດການນໍາເຂົ້າ ແລະ ສົ່ງອອກຍານພາຫະນະ ໂດຍປະກອບ ເອກະສານຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ຂອງດໍາລັດສະບັບນີ້, ພາຍຫຼັງໄດ້ຮັບໃບຢັ້ງຢືນແລ້ວ ຈຶ່ງສາມາດດໍາ ເນີນການເຄື່ອນໄຫວທຸລະກິດ.

**ມາດຕາ 16 ເອກະສານປະກອບຂໍອະນຸຍາດເຄື່ອນໄຫວທຸລະກິດການນໍາເຂົ້າ ແລະ ສົ່ງອອກຍານພາຫະນະ**

ການຂໍອະນຸຍາດເຄື່ອນໄຫວທຸລະກິດການນໍາເຂົ້າ ແລະ ສົ່ງອອກຍານພາຫະນະຕ້ອງປະກອບເອກະ ສານ ດັ່ງນີ້:

1. ຄໍາຮ້ອງຕາມແບບພິມທີ່ກະຊວງອຸດສາຫະກໍາ ແລະ ການຄ້າ ໄດ້ກໍານົດ;
2. ສໍາເນົາໃບທະບຽນວິສາຫະກິດ;
3. ໜັງສື ຫຼື ເອກະສານຢັ້ງຢືນ ການມອບສິດເປັນຕົວແທນຈໍາໜ່າຍຍານພາຫະນະ;
4. ສໍາເນົາໃບຢັ້ງຢືນການມອບເລກປະຈໍາຕົວຜູ້ເສຍອາກອນ;
5. ສໍາເນົາໃບອະນຸຍາດການປຸກສ້າງຊົ່ວຄາວ ແລະ ໃບຢັ້ງຢືນຄວາມຖືກຕ້ອງຂອງການກໍ່ສ້າງສະຖານ ທີ່ ວາງຈໍາໜ່າຍຍານພາຫະນະ;
6. ໃບຢັ້ງຢືນຖານະທາງດ້ານການເງິນຂອງວິສາຫະກິດ ທີ່ຢັ້ງຢືນໂດຍທະນາຄານ ຢູ່ ສປປ ລາວ.

**ມາດຕາ 17 ການອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດການນໍາເຂົ້າ ແລະ ສົ່ງອອກ ຍານພາຫະນະ**

ພາຍຫຼັງໄດ້ຮັບເອກະສານແລ້ວ ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງກວດກາຄວາມຄົບ ຖ້ວນ ຂອງເອກະສານ ແລະ ແຈ້ງໃຫ້ຜູ້ຮ້ອງຂໍຮັບຊາບໃນທັນທີ. ໃນກໍລະນີ ເອກະສານຄົບຖ້ວນ, ກະຊວງອຸດສາຫະກໍາ ແລະ ການຄ້າ ຕ້ອງໄດ້ປະສານຄືນກັບບໍລິສັດທີ່ມອບສິດ ເປັນຕົວແທນຈໍາໜ່າຍຍານພາຫະນະ ເພື່ອຢັ້ງຢືນຄວາມ ຖືກຕ້ອງ ພາຍໃນສິບວັນລັດຖະການ. ຫາກບໍລິສັດທີ່ມອບສິດ ບໍ່ຢັ້ງຢືນ ຄວາມຖືກຕ້ອງ ພາຍໃນກໍານົດເວລາ ດັ່ງກ່າວ ຫຼື ປະຕິເສດການຮັບຮູ້ ເອກະສານມອບສິດ, ກະຊວງອຸດສາຫະກໍາ ແລະ ການຄ້າ ຈະແຈ້ງເປັນລາຍລັກ ອັກສອນ ໃຫ້ຜູ້ຮ້ອງຂໍຮັບຊາບພາຍໃນ ຫ້າວັນ ລັດຖະການ.

ກະຊວງອຸດສາຫະກໍາ ແລະ ການຄ້າ ຈະສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ລົງກວດກາສະຖານທີ່ວາງ ຈໍາໜ່າຍຍານພາຫະນະພາຍໃນ ຫ້າວັນລັດຖະການ ຫຼັງຈາກໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ.

ໃນກໍລະນີບໍ່ສາມາດອອກໃບຢັ້ງຢືນໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍ ໃນ ຊາວວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 18 ອາຍຸ ແລະ ການຕໍ່ອາຍຸໃບຢັ້ງຢືນການເຄື່ອນໄຫວທຸລະກິດການນໍາເຂົ້າ-ສົ່ງອອກຍານພາຫະນະ**

ໃບຢັ້ງຢືນການເຄື່ອນໄຫວທຸລະກິດການນໍາເຂົ້າ ແລະ ສົ່ງອອກ ຍານພາຫະນະມີອາຍຸນໍາໃຊ້ ສາມປີ ແລະ ສາມາດຕໍ່ໄດ້.

ການຕໍ່ອາຍຸໃບຢັ້ງຢືນການເຄື່ອນໄຫວທຸລະກິດການນໍາເຂົ້າ ແລະ ສົ່ງອອກຍານພາຫະນະໃຫ້ປະກອບ ເອກະສານຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ຂອງດາລັດສະບັບນີ້ ສະເໜີຕໍ່ກະຊວງອຸດສາຫະກໍາ ແລະ ການຄ້າ ກ່ອນມື້ໝົດ ອາຍຸ ຫົກສິບວັນ.

**ມາດຕາ 19 ເງື່ອນໄຂການເຄື່ອນໄຫວທຸລະກິດການນຳເຂົ້າ ແລະ ສົ່ງອອກ ຍານພາຫະນະ**

ການເຄື່ອນໄຫວທຸລະກິດການນຳເຂົ້າ ແລະ ສົ່ງອອກ ຍານພາຫະນະຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີໃບຢັ້ງຢືນການເຄື່ອນໄຫວທຸລະກິດການນຳເຂົ້າ ແລະ ສົ່ງອອກ ຍານພາຫະນະ;
2. ຖືບັນຊີຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ມີບັນຊີເງິນຝາກຢູ່ທະນາຄານ ທີ່ຕັ້ງຢູ່ ສປປ ລາວ ແລະ ການຊື້-ຂາຍຍານພາຫະນະຕ້ອງຊຳລະ ຜ່ານທະນາຄານ;
4. ມີສະຖານທີ່ວາງຈຳໜ່າຍ ແລະ ເກັບຮັກສາຍານພາຫະນະ ຕາມເງື່ອນໄຂ ແລະ ມາດຕະຖານທີ່ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;
5. ມີຕົວແທນຈຳໜ່າຍ ຫຼື ສາຂາ ທີ່ສາມາດໃຫ້ບໍລິການຫຼັງການຂາຍ;
6. ມີປະກັນໄພອັກຄີໄພ ຕາມກົດໝາຍວ່າດ້ວຍການປະກັນໄພ.

ສຳລັບບໍລິສັດນຳເຂົ້າ ແລະ ສົ່ງອອກ ຍານພາຫະນະ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວ ກ່ອນດຳລັດສະບັບນີ້ຕ້ອງປັບປຸງເງື່ອນໄຂຂອງຕົນ ໃຫ້ສອດຄ່ອງກັບບົດບັນຍັດຂອງມາດຕານີ້ ພາຍໃນກຳນົດ ເວລາ ໜຶ່ງປີ ນັບແຕ່ວັນທີ່ດຳລັດສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

**ມາດຕາ 20 ການນຳເຂົ້າຍານພາຫະນະ**

ການນຳເຂົ້າຍານພາຫະນະ ແມ່ນ ການນຳເຂົ້າພາຫະນະທີ່ສົມບູນ ເຂົ້າມາເພື່ອຈຳໜ່າຍ ຢູ່ ສປປ ລາວ.

ການນຳເຂົ້າຍານພາຫະນະ ຕ້ອງດຳເນີນໂດຍບໍລິສັດນຳເຂົ້າ ແລະ ສົ່ງອອກ ຍານພາຫະນະທີ່ຈົດທະບຽນ ຖືກຕ້ອງຕາມດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

ການນຳເຂົ້າ ຍານພາຫະນະແຕ່ລະຄັນຕ້ອງມີແຫຼ່ງທີ່ມາຊັດເຈນ, ນຳເຂົ້າຜ່ານດ່ານສາກົນ ແລະ ໄດ້ຮັບອະນຸຍາດນຳເຂົ້າ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ໂດຍສອດຄ່ອງກັບມາດຕະຖານເຕັກນິກ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ກຳນົດ.

ບໍລິສັດນຳເຂົ້າ ແລະ ສົ່ງອອກພາຫະນະ ຕ້ອງມີແຜນນຳເຂົ້າ ແລະ ສົ່ງອອກ ປະຈຳປີ ໂດຍຜ່ານການຮັບຮອງ ຈາກສະມາຄົມອຸດສາຫະກຳຍານພາຫະນະ.

ການນຳເຂົ້າແຕ່ລະຄັ້ງ ຕ້ອງໄດ້ຮັບການອະນຸຍາດ ຈາກກະຊວງອຸດສາຫະກຳ ແລະ ການຄ້າ, ການປະກອບເອກະສານ ສະເໜີນຳເຂົ້າ ຕ້ອງປະກອບມີແຜນນຳເຂົ້າ ແລະ ສົ່ງອອກປະຈຳປີ ພ້ອມດ້ວຍເອກະສານອື່ນທີ່ກ່ຽວຂ້ອງ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ການສົ່ງອອກຍານພາຫະນະ**

ການສົ່ງອອກຍານພາຫະນະ ແມ່ນການສົ່ງອອກຍານພາຫະນະ ທີ່ຜະລິດ ຫຼື ປະກອບ ຢູ່ ສປປ ລາວ ສົ່ງໄປຈຳໜ່າຍ ຢູ່ ຕ່າງປະເທດ.

ການສົ່ງອອກຍານພາຫະນະ ຕ້ອງດຳເນີນໂດຍບໍລິສັດ ນຳເຂົ້າ ແລະ ສົ່ງອອກ ຍານພາຫະນະ ທີ່ຈົດທະບຽນຖືກຕ້ອງ ຕາມດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

ການສົ່ງອອກແຕ່ລະຄັ້ງ ແຈ້ງໃຫ້ ຂະແໜງອຸດສາຫະກຳ ແລະ ການຄ້າ ຢູ່ດ່ານ ບ່ອນທີ່ສົ່ງອອກ ເພື່ອເກັບກຳຂໍ້ມູນ ແລະ ຕ້ອງສົ່ງອອກຜ່ານດ່ານສາກົນ.

**ມາດຕາ 22 ການນຳເຂົ້າຍານພາຫະນະ ເພື່ອສົ່ງອອກຕໍ່**

ການນຳເຂົ້າຍານພາຫະນະເພື່ອສົ່ງອອກຕໍ່ ແມ່ນການນຳເຂົ້າ ຄ່ຽນຖ່າຍ ຫຼື ຢຸດ ຢູ່ ສປປ ລາວ ໄລຍະໜຶ່ງ ແລ້ວສົ່ງອອກຕໍ່ ໂດຍບໍ່ໄດ້ຈຳໜ່າຍ ຢູ່ ສປປ ລາວ.

ການເຄື່ອນຍ້າຍຍານພາຫະນະ ເພື່ອສົ່ງອອກຕໍ່ ຕ້ອງດຳເນີນໂດຍບໍລິສັດນຳເຂົ້າ ແລະ ສົ່ງອອກ ພາຫະນະທີ່ຈົດທະບຽນຖືກຕ້ອງ ຕາມດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ.

ການນຳເຂົ້າເພື່ອສົ່ງອອກຕໍ່ແຕ່ລະຄັ້ງ ຕ້ອງໄດ້ຮັບອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າ, ຕ້ອງນຳເຂົ້າ ແລະ ສົ່ງອອກຜ່ານດ່ານ ທີ່ໄດ້ກຳນົດໄວ້, ຕ້ອງສົ່ງອອກພາຍໃນ ສາມສິບວັນ ນັບແຕ່ມື້ນຳເຂົ້າ ແລະ ຕ້ອງສົ່ງອອກ ຄົບຕາມຈຳນວນທີ່ນຳເຂົ້າ ພາຍໃຕ້ການຢັ້ງຢືນຈາກກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງການເງິນ.

ການປະກອບເອກະສານສະເໜີນຳເຂົ້າເພື່ອສົ່ງອອກຕໍ່ ຕ້ອງປະກອບມີ ສັນຍາບໍລິການຂົນສົ່ງ, ສັນຍາຊື້-ຂາຍຕົ້ນທາງ ແລະ ປາຍທາງ ພ້ອມດ້ວຍເອກະສານອື່ນທີ່ກ່ຽວຂ້ອງ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 23 ການເຄື່ອນຍ້າຍຍານພາຫະນະຜ່ານແດນ**

ການເຄື່ອນຍ້າຍຍານພາຫະນະຜ່ານແດນ ແມ່ນການເຄື່ອນຍ້າຍຈາກປະເທດໃດໜຶ່ງຜ່ານແດນ ສປປ ລາວໄປຍັງປະເທດທີສາມ ໂດຍບໍ່ມີການຄ່ຽນຖ່າຍ ຫຼື ຢຸດຢູ່ ສປປ ລາວ ໄລຍະໃດໜຶ່ງ ແລ້ວສົ່ງອອກ.

ໃນກໍລະນີສຸກເສີນທີ່ຈຳເປັນຕ້ອງມີການຄ່ຽນຖ່າຍຢູ່ ສປປ ລາວ ຍານພາຫະນະຕ້ອງຢູ່ໃນສະພາບເດີມ ແລະ ຖືກຈັດສົ່ງຕາມເສັ້ນທາງ ແລະ ວັນເວລາທີ່ກຳນົດໄວ້ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍການຂົນສົ່ງທາງບົກ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ການເຄື່ອນຍ້າຍ ຍານພາຫະນະຜ່ານແດນແຕ່ລະຄັ້ງ ຕ້ອງໄດ້ຮັບອະນຸຍາດຈາກກະຊວງອຸດສາຫະກຳ ແລະ ການຄ້າ, ຕ້ອງນຳເຂົ້າ, ຂົນສົ່ງ ແລະ ສົ່ງອອກຜ່ານດ່ານ ທີ່ໄດ້ກຳນົດໄວ້ ໂດຍມີເຈົ້າໜ້າທີ່ຂອງຂະແໜງການເງິນ ແລະ ຂະແໜງອຸດສາຫະກຳ ແລະ ການຄ້າ ຕິດຕາມແຕ່ດ່ານນຳເຂົ້າ ເຖິງດ່ານສົ່ງອອກ.

ການປະກອບເອກະສານສະເໜີນຳເຂົ້າຜ່ານແດນ ຕ້ອງປະກອບມີ ສັນຍາບໍລິການຂົນສົ່ງ, ສັນຍາຊື້-ຂາຍຕົ້ນທາງ ແລະ ປາຍທາງ ພ້ອມດ້ວຍເອກະສານອື່ນທີ່ກ່ຽວຂ້ອງ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດການຈຳໜ່າຍຍານພາຫະນະ

**ມາດຕາ 24 ຂັ້ນຕອນການສ້າງຕັ້ງ ວິສາຫະກິດການຈຳໜ່າຍຍານພາຫະນະ**

ການສ້າງຕັ້ງ ແລະ ການດຳເນີນທຸລະກິດການຈຳໜ່າຍຍານພາຫະນະ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ແຈ້ງຂຶ້ນທະບຽນວິສາຫະກິດ;
2. ຂໍອະນຸຍາດປຸກສ້າງ ສະຖານທີ່ວາງຈຳໜ່າຍຍານພາຫະນະ;
3. ຂໍອະນຸຍາດເຄື່ອນໄຫວທຸລະກິດການຈຳໜ່າຍຍານພາຫະນະ.

**ມາດຕາ 25 ເງື່ອນໄຂການຂຶ້ນທະບຽນວິສາຫະກິດທຸລະກິດການຈຳໜ່າຍຍານພາຫະນະ**

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດການຈຳໜ່າຍ ຍານພາຫະນະ ຕ້ອງສ້າງຕັ້ງເປັນບໍລິສັດ ເພື່ອເຄື່ອນໄຫວສະເພາະຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

ການຂຶ້ນທະບຽນວິສາຫະກິດການຈຳໜ່າຍຍານພາຫະນະ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີທຶນຈົດທະບຽນ ແຕ່ ສອງຕື້ (2.000.000.000) ກີບ ຂຶ້ນໄປ ແລະ ມີທຶນໝູນວຽນ ໜຶ່ງຕື້ (1.000.000.000) ກີບ ຂຶ້ນໄປ;

2. ມີສະຖານທີ່ສຳລັບນຳໃຊ້ເປັນບ່ອນວາງຈຳໜ່າຍຍານພາຫະນະຕາມເງື່ອນໄຂທີ່ກຳນົດໄວ້ໃນດຳລັດສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ.

3. ມີສັນຍາຊື້-ຂາຍຈາກບໍລິສັດນຳເຂົ້າ-ສົ່ງອອກ ຍານພາຫະນະ ຫຼື ໂຮງງານຜະລິດ ແລະ/ຫຼື ປະກອບຍານພາຫະນະ ຢູ່ ສປປ ລາວ.

**ມາດຕາ 26 ການແຈ້ງຂຶ້ນທະບຽນວິສາຫະກິດຂອງທຸລະກິດ ການຈຳໜ່າຍຍານພາຫະນະ**

ການແຈ້ງຂຶ້ນທະບຽນວິສາຫະກິດທຸລະກິດການຈຳໜ່າຍຍານພາຫະນະ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ແລະ ຕ້ອງປະກອບມີເອກະສານ ຕົ້ນຕໍດັ່ງນີ້:

1. ໃບຢັ້ງຢືນຖານະທາງດ້ານການເງິນຂອງຜູ້ສະເໜີສ້າງຕັ້ງວິສາຫະກິດ ຈາກທະນາຄານຢູ່ພາຍໃນ;

2. ເອກະສານຢັ້ງຢືນສະຖານທີ່ຕັ້ງ ທີ່ຢັ້ງຢືນໂດຍອົງການປົກຄອງບ້ານ ສຳລັບນາໃຊ້ເປັນສະຖານ ທີ່ວາງຈຳໜ່າຍຍານພາຫະນະ.

**ມາດຕາ 27 ການພິຈາລະນາຂຶ້ນທະບຽນວິສາຫະກິດການຈຳໜ່າຍຍານພາຫະນະ**

ພາຍຫຼັງໄດ້ຮັບເອກະສານແຈ້ງຂຶ້ນທະບຽນ ຄົບຖ້ວນ ແລະ ຖືກຕ້ອງ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາຂຶ້ນທະບຽນຢ່າງຊ້າ ບໍ່ເກີນ ສິບວັນລັດຖະການ.

ກໍລະນີບໍ່ເຫັນດີ ຂະແໜງອຸດສາຫະກາ ແລະ ການຄ້າ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ແຈ້ງຂຶ້ນທະບຽນຊາບໂດຍທັນທີ ຢ່າງຊ້າບໍ່ເກີນ ຫ້າ ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 28 ການຂໍອະນຸຍາດເຄື່ອນໄຫວທຸລະກິດການຈຳໜ່າຍຍານພາຫະນະ**

ພາຍຫຼັງໄດ້ໃບທະບຽນວິສາຫະກິດ ແລະ ປຸກສ້າງສະຖານທີ່ວາງຈຳໜ່າຍຍານພາຫະນະສຳເລັດ ຕາມເງື່ອນໄຂ ທີ່ກຳນົດໃນມາດຕາ 31 ຂອງດຳລັດສະບັບນີ້ ໃຫ້ສະເໜີຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອຂໍໃບຢັ້ງຢືນການເຄື່ອນໄຫວທຸລະກິດການຈຳໜ່າຍຍານພາຫະນະ ໂດຍປະກອບເອກະສານຕາມ ທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງດຳລັດສະບັບນີ້, ພາຍຫຼັງໄດ້ຮັບໃບຢັ້ງຢືນແລ້ວ ຈຶ່ງສາມາດດຳເນີນການເຄື່ອນໄຫວທຸລະກິດ.

**ມາດຕາ 29 ການປະກອບເອກະສານຂໍອະນຸຍາດເຄື່ອນໄຫວທຸລະກິດການຈຳໜ່າຍຍານພາຫະນະ**

ການຂໍອະນຸຍາດເຄື່ອນໄຫວທຸລະກິດການຈຳໜ່າຍຍານພາຫະນະຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຕາມແບບພິມທີ່ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ;
4. ມີສັນຍາຊື້-ຂາຍ ຫຼື ເປັນຕົວແທນຈຳໜ່າຍຈາກບໍລິສັດນຳເຂົ້າ ແລະ ສົ່ງອອກ ຫຼື ໂຮງງານຜະລິດ-ປະກອບ;
5. ສຳເນົາໃບອະນຸຍາດການປຸກສ້າງຊົ່ວຄາວ ແລະ ໃບຢັ້ງຢືນຄວາມຖືກຕ້ອງຂອງການກໍ່ສ້າງສະຖານທີ່ວາງຈຳໜ່າຍຍານພາຫະນະ;
6. ໃບຢັ້ງຢືນຖານະທາງດ້ານການເງິນຂອງວິສາຫະກິດ ທີ່ຢັ້ງຢືນໂດຍທະນາຄານ ຢູ່ ສປປ ລາວ.

**ມາດຕາ 30 ການອອກໃບຢັ້ງຢືນການເຄື່ອນໄຫວທຸລະກິດການຈຳໜ່າຍຍານພາຫະນະ**

ພາຍຫຼັງໄດ້ຮັບເອກະສານແລ້ວ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງກວດກາ ຄວາມຄົບຖ້ວນ-ຖືກຕ້ອງຂອງເອກະສານ ແລະ ແຈ້ງໃຫ້ຜູ້ຮ້ອງຂໍຮັບຊາບໃນທັນທີ. ໃນກໍລະນີເອກະສານຄົບຖ້ວນ, ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ລົງກວດກາສະຖານທີ່ວາງຈຳໜ່າຍຍານພາຫະນະ ພາຍໃນ ຫ້າວັນ ລັດຖະການ.

ພາຍຫຼັງລົງກວດກາສະຖານທີ່ວາງຈຳໜ່າຍຍານພາຫະນະ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາ ອອກໃບຢັ້ງຢືນ ການເຄື່ອນໄຫວທຸລະກິດ ໃຫ້ຜູ້ສະເໜີພາຍໃນ 5 ວັນລັດຖະການ ນັບແຕ່ມື້ລົງກວດກາສະຖານທີ່.

ໃນກໍລະນີບໍ່ສາມາດອອກໃບຢັ້ງຢືນໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ.

**ມາດຕາ 31 ເງື່ອນໄຂການເຄື່ອນໄຫວທຸລະກິດການຈຳໜ່າຍຍານພາຫະນະ**

ການເຄື່ອນໄຫວທຸລະກິດການຈຳໜ່າຍຍານພາຫະນະຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີໃບຢັ້ງຢືນການເຄື່ອນໄຫວທຸລະກິດການຈຳໜ່າຍ ຍານພາຫະນະ;
2. ຖືບັນຊີຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ມີບັນຊີເງິນຝາກຢູ່ທະນາຄານ ທີ່ຕັ້ງຢູ່ ສປປ ລາວ ແລະ ການຊື້-ຂາຍຍານພາຫະນະ ຕ້ອງຊຳລະຜ່ານທະນາຄານ;
4. ມີສະຖານທີ່ວາງຈຳໜ່າຍ ແລະ ເກັບຮັກສາຍານພາຫະນະ ຕາມເງື່ອນໄຂ ແລະ ມາດຕະຖານທີ່ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ;
5. ມີປະກັນໄພອັກຄີໄພ ຕາມກົດໝາຍວ່າດ້ວຍການປະກັນໄພ.
6. ມີການບໍລິການຫຼັງການຂາຍ

ສຳລັບບໍລິສັດຈຳໜ່າຍຍານພາຫະນະ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວ ກ່ອນດຳລັດສະບັບນີ້ ຕ້ອງປັບປຸງເງື່ອນໄຂຂອງຕົນ ໃຫ້ສອດຄ່ອງກັບບົດບັນຍັດຂອງມາດຕານີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ພາຍໃນກຳນົດເວລາ ໜຶ່ງປີ ນັບແຕ່ວັນທີ່ດຳລັດສະບັບນີ້ມີຜົນສັກສິດເປັນຕົ້ນໄປ.

## ໝວດທີ 3
## ການຈັດຕັ້ງ ແລະ ການເຄື່ອນໄຫວ ທຸລະກິດການຜະລິດ-ປະກອບຍານພາຫະນະ

**ມາດຕາ 32 ຂັ້ນຕອນການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດການຜະລິດ-ປະກອບຍານພາຫະນະ**

ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດການຜະລິດ-ປະກອບຍານພາຫະນະ ຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:

1. ແຈ້ງຂຶ້ນທະບຽນວິສາຫະກິດ;
2. ສ້າງບົດປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ;
3. ຂໍອະນຸຍາດປຸກສ້າງໂຮງງານ;
4. ຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານ.

**ມາດຕາ 33 ເງື່ອນໄຂການຂຶ້ນທະບຽນວິສາຫະກິດທຸລະກິດການຜະລິດ-ປະກອບຍານພາຫະນະ**

ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດການຜະລິດ-ປະກອບຍານພາຫະນະ ຕ້ອງສ້າງຕັ້ງເປັນບໍລິສັດ ເພື່ອເຄື່ອນໄຫວສະເພາະຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ.

ການຂຶ້ນທະບຽນວິສາຫະກິດການຜະລິດ-ປະກອບຍານພາຫະນະ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີທຶນຈົດທະບຽນ ແຕ່ ....ຕື້ (.000.000.000) ກີບ ຂຶ້ນໄປ ແລະ ມີທຶນໝູນວຽນ ...ຕື້(. 000.000.000) ກີບ ຂຶ້ນໄປ;

2. ມີສະຖານທີ່ຕັ້ງໂຮງງານສອດຄ່ອງຕາມເງື່ອນໄຂ ທີ່ກຳນົດໄວ້ໃນມາດຕາ 12 ຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ (ສະບັບປັບປຸງ) ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013 ແລະ ນິຕິກາອື່ນທີ່ກ່ຽວຂ້ອງ.

**ມາດຕາ 34 ເອກະສານປະກອບສະເໜີຂຶ້ນທະບຽນວິສາຫະກິດທຸລະກິດການຜະລິດ-ປະກອບຍານພາຫະນະ**

ການແຈ້ງຂຶ້ນທະບຽນວິສາຫະກິດທຸລະກິດການຜະລິດ-ປະກອບຍານພາຫະນະ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວິສາຫະກິດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ແລະ ຕ້ອງປະກອບມີເອກະສານ ຕົ້ນຕໍດັ່ງນີ້:

1. ໃບຢັ້ງຢືນຖານະທາງດ້ານການເງິນຂອງຜູ້ສະເໜີສ້າງຕັ້ງວິສາຫະກິດ ຈາກທະນາຄານຢູ່ພາຍໃນ ຫຼື ຕ່າງປະເທດ;
2. ບົດວິພາກເສດຖະກິດ-ເຕັກນິກໂຮງງານຜະລິດ-ປະກອບ ຍານພາຫະນະ;
3. ເອກະສານຢັ້ງຢືນສະຖານທີ່ຕັ້ງໂຮງງານ.

**ມາດຕາ 35 ການພິຈາລະນາຂຶ້ນທະບຽນວິສາຫະກິດທຸລະກິດການປະກອບຍານພາຫະນະ**

ພາຍຫຼັງໄດ້ຮັບເອກະສານແຈ້ງຂຶ້ນທະບຽນ ຄົບຖ້ວນ ແລະ ຖືກຕ້ອງ ຂະແໜງການອຸດສາຫະກຳ ແລະ ການຄ້າ ຕ້ອງພິຈາລະນາຂຶ້ນທະບຽນຢ່າງຊ້າ ບໍ່ເກີນຊາວວັນລັດຖະການ.

ກໍລະນີບໍ່ເຫັນດີ ຂະແໜງອຸດສາຫະກາ ແລະ ການຄ້າ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນໃຫ້ໃຫ້ຜູ້ແຈ້ງຂຶ້ນທະບຽນ ຢ່າງຊ້າບໍ່ເກີນສິບວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 36 ການຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານຜະລິດ-ປະກອບຍານພາຫະນະ**

ພາຍຫຼັງໄດ້ໃບທະບຽນວິສາຫະກິດ ແລະ ປຸກສ້າງໂຮງງານສຳເລັດ ຕາມເງື່ອນໄຂທີ່ກຳນົດໃນ ມາດຕາ 39 ຂອງດຳລັດສະບັບນີ້ ໃຫ້ສະເໜີຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອຂໍໃບຢັ້ງຢືນການເຄື່ອນໄຫວທຸລະກິດການຈຳໜ່າຍຍານພາຫະນະ ໂດຍປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງດຳລັດສະບັບນີ້, ພາຍຫຼັງໄດ້ຮັບໃບຢັ້ງຢືນແລ້ວ ຈຶ່ງສາມາດດຳເນີນການເຄື່ອນໄຫວທຸລະກິດ.

**ມາດຕາ 37 ເອກະສານປະກອບຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານຜະລິດ-ປະກອບຍານພາຫະນະ**

ການຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານຜະລິດ-ປະກອບຍານພາຫະນະຕ້ອງປະກອບເອກະສານຕົ້ນຕໍ ດັ່ງນີ້:

1. ຄຳຮ້ອງຕາມແບບພິມທີ່ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ກຳນົດ;
2. ໃບທະບຽນວິສາຫະກິດ;
3. ໃບຢັ້ງຢືນການມອບເລກປະຈຳຕົວຜູ້ເສຍອາກອນ;
4. ໃບຢັ້ງຢືນດ້ານສິ່ງແວດລ້ອມ ແລະ ສັງຄົມ;

5. ໃບມອບສິດຈາກບໍລິສັດແມ່;
6. ໃບອະນຸຍາດການປຸກສ້າງຊົ່ວຄາວ ແລະ ໃບຢັ້ງຢືນຄວາມຖືກຕ້ອງຂອງການກໍ່ສ້າງໂຮງງານ;
7. ໃບຢັ້ງຢືນຖານະທາງດ້ານການເງິນຂອງວິສາຫະກິດ ທີ່ຢັ້ງຢືນໂດຍທະນາຄານ ຢູ່ ສປປ ລາວ.

**ມາດຕາ 38 ການອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານ**

ພາຍຫຼັງໄດ້ຮັບເອກະສານແລ້ວ ຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງກວດກາຄວາມຄົບຖ້ວນຂອງເອກະສານ ແລະ ແຈ້ງໃຫ້ຜູ້ຮ້ອງຂໍຮັບຊາບໃນທັນທີ. ຫຼັງຈາກໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຂະແໜງ ອຸດສາຫະກຳ ແລະ ການຄ້າ ຕ້ອງສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ລົງກວດກາມາດຕະຖານເຕັກນິກໂຮງງານ ພາຍໃນຫ້າວັນ ລັດຖະການ.

ພາຍຫຼັງຜ່ານການກວດກາໂຮງງານຖືກຕ້ອງຕາມເຕັກນິກມາດຕະຖານ ຂະແໜງອຸດສາຫະກຳ ແລະ ການຄ້າ ຕ້ອງອອກໃບຢັ້ງຢືນການດຳເນີນກິດຈະການໂຮງງານ ພາຍໃນຫ້າວັນລັດຖະການ.

ໃນກໍລະນີບໍ່ສາມາດອອກໃບຢັ້ງຢືນໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ສະເໜີຂໍໃບຢັ້ງຢືນດຳເນີນກິດຈະການໂຮງງານ ພາຍໃນ ຫ້າວັນລັດຖະການ ນັບແຕ່ວັນລົງກວດກາໂຮງງານ.

**ມາດຕາ 39 ເງື່ອນໄຂການດຳເນີນກິດຈະການໂຮງງານ-ປະກອບຍານພາຫະນະ**

ການດຳເນີນກິດຈະການໂຮງງານຜະລິດ-ປະກອບຍານພາຫະນະຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ມີໃບຢັ້ງຢືນການດຳເນີນກິດຈະການໂຮງງານຜະລິດ-ປະກອບຍານພາຫະນະ;
2. ຖືບັນຊີຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ມີໂຮງງານ ແລະ ອາຄານໂຮງງານ ຖືກຕ້ອງຕາມເງື່ອນໄຂ ແລະ ມາດຕະຖານທີ່ກຳນົດໄວ້ ໃນກົດ ໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ມີປະກັນໄພອັກຄີໄພ ຕາມກົດໝາຍວ່າດ້ວຍການປະກັນໄພ.

**ມາດຕາ 40 ການນຳເຂົ້າຊິ້ນສ່ວນເພື່ອຜະລິດ-ປະກອບຍານພາຫະນະ**

ການນຳເຂົ້າຊິ້ນສ່ວນຍານພາຫະນະ ແມ່ນ ການນຳເຂົ້າປະເພດຊິ້ນສ່ວນ ຕາມທີ່ກຳນົດໃນມາດຕາ 51 ຂອງດຳລັດສະບັບນີ້ ນຳເຂົ້າມາເພື່ອສະໜອງແກ່ການຜະລິດ ຫຼື ປະກອບຍານພາຫະນະ ຢູ່ ສປປ ລາວ.

ການນຳເຂົ້າຊິ້ນສ່ວນຍານພາຫະນະ ຕ້ອງມີແຫຼ່ງທີ່ມາຊັດເຈນ, ນຳເຂົ້າຜ່ານດ່ານສາກົນ ແລະ ໄດ້ຮັບອະນຸຍາດນຳເຂົ້າຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ໂດຍສອດຄ່ອງຕາມແຜນການນຳເຂົ້າປະຈຳປີ.

ຜູ້ດຳເນີນທຸລະກິດ ກິດຈະການໂຮງງານ ການຜະລິດ-ປະກອບພາຫະນະ ຕ້ອງມີແຜນນຳເຂົ້າຊິ້ນສ່ວນປະຈຳປີ ໂດຍຜ່ານການຮັບຮອງ ແລະ ຢັ້ງຢືນຈາກສະມາຄົມອຸດສາຫະກຳຍານພາຫະນະ ແລະ ຂະແໜງອຸດສາຫະກຳ ແລະ ການຄ້າ .

ການປະກອບເອກະສານສະເໜີນຳເຂົ້າ ຕ້ອງປະກອບມີແຜນນຳເຂົ້າປະຈຳປີ ພ້ອມດ້ວຍເອກະສານອື່ນທີ່ກ່ຽວຂ້ອງ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ IV
## ການອອກໃບຢັ້ງຢືນມາດຕະຖານ, ເຕັກນິກຍານພາຫະນະ ແລະ ຊິ້ນສ່ວນຍານພາຫະນະ
### ໝວດທີ 1
### ການອອກໃບຢັ້ງຢືນ ມາດຕະຖານ ແລະ ເຕັກນິກຍານພາຫະນະ

**ມາດຕາ 41 ມາດຕະຖານເຕັກນິກຂອງຍານພາຫະນະ**

ມາດຕະຖານເຕັກນິກຂອງຍານພາຫະນະ ແມ່ນ ເງື່ອນໄຂກໍານົດດ້ານຄຸນລັກສະນະສະເພາະ ຂອງຍານພາຫະນະ ທີ່ຜ່ານຂະບວນການຜະລິດ ແລະ ປະກອບ, ຈັດແບ່ງປະເພດ, ຂະໜາດ, ນໍ້າໜັກ ແລະ ກໍານົດຈຸດປະສົງຂອງການນໍາໃຊ້.

ຍານພາຫະນະທຸກຊະນິດທີ່ນໍາເຂົ້າ, ຜະລິດ, ປະກອບ ເພື່ອຂຶ້ນທະບຽນ ແລະ ນໍາໃຊ້ຢູ່ ສປປ ລາວ ຕ້ອງມີຄຸນນະພາບທີ່ຖືກຕ້ອງຕາມມາດຕະຖານ ທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 42 ການອອກໃບອະນຸຍາດທາງດ້ານເຕັກນິກ**

ການອອກໃບອະນຸຍາດທາງດ້ານເຕັກນິກ ແມ່ນ ການອອກອະນຸຍາດໃຫ້ນໍາໃຊ້ຍານພາຫະນະ, ກົນຈັກທີ່ຖືກຕ້ອງ ຕາມມາດຕະຖານເຕັກນິກທີ່ໄດ້ກໍານົດໄວ້ໃນມາດຕາ 41 ຂອງດໍາລັດສະບັບນີ້ ເພື່ອເຂົ້າມາຈໍາໜ່າຍ ແລະ ຂຶ້ນທະບຽນ ຢູ່ ສປປ ລາວ ໂດຍແມ່ນຂະແໜງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກໍານົດ, ຄຸ້ມຄອງ, ກວດກາ ແລະ ຕິດຕາມ.

ການນໍາເຂົ້າຍານພາຫະນະ ຕ້ອງສະເໜີຕໍ່ຂະແໜງ ໂຍທາທິການ ແລະ ຂົນສົ່ງ ເພື່ອອອກໃບ ຢັ້ງຢືນດ້ານເຕັກນິກ ຕາມມາດຕະຖານເຕັກນິກ ທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍ ການຈະລາຈອນທາງບົກ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 43 ການອອກໃບຢັ້ງຢືນທາງດ້ານເຕັກນິກຍານພາຫະນະ**

ການອອກໃບຢັ້ງຢືນທາງດ້ານເຕັກນິກຍານພາຫະນະ ແມ່ນ ການອອກໃບຢັ້ງຢືນທາງດ້ານເຕັກນິກ ເພື່ອຂຶ້ນທະບຽນສໍາລັບຍານພາຫະນະ ທີ່ຜະລິດ ແລະ ປະກອບ ໃນ ສປປ ລາວ ທີ່ໄດ້ຢັ້ງຢືນບັນດາມາດຕະຖານເຕັກນິກຕ່າງໆ ຂອງຍານພາຫະນະ ທີ່ຜະລິດ ແລະ ປະກອບເປັນຄັນ ທີ່ມີຄຸນລັກສະນະ ແລະ ອົງປະກອບ ຖືກຕ້ອງຕາມມາດຕະຖານເຕັກນິກຂອງຂະແໜງໂຍທາທິການ ແລະ ຂົນສົ່ງ ໄດ້ວາງອອກ.

**ມາດຕາ 44 ການອອກໃບອະນຸຍາດທາງດ້ານເຕັກນິກ ຊິ້ນສ່ວນ**

ການອອກໃບອະນຸຍາດ ທາງດ້ານເຕັກນິກຊິ້ນສ່ວນ ແມ່ນ ການອອກ ເອກະສານຢັ້ງຢືນທາງດ້ານເຕັກນິກ ຂອງຊິ້ນສ່ວນຍານພາຫະນະທີ່ນໍາເຂົ້າມາເພື່ອປະກອບ ໃນໂຮງງານ.

ການນໍາເຂົ້າ ຊິ້ນສ່ວນ, ແລະ ອົງປະກອບຕ່າງໆ ຂອງຍານພາຫະນະ ເພື່ອມາປະກອບເປັນຄັນ, ຈໍາໜ່າຍ ຢູ່ພາຍໃນ ສປປ ລາວ ຕ້ອງປະຕິບັດ ຕາມມາດຕະຖານເຕັກນິກຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງໄດ້ວາງອອກ.

ສໍາລັບມາດຕະຖານເຕັກນິກຂອງຊິ້ນສ່ວນທີ່ສົ່ງອອກໄປຕ່າງປະເທດແມ່ນປະຕິບັດຕາມມາດຕະຖານຂອງປະເທດຜູ້ນໍາເຂົ້າ.

**ມາດຕາ 45 ຂັ້ນຕອນການອອກໃບອະນຸຍາດທາງດ້ານເຕັກນິກ ນໍາເຂົ້າຍານພາຫະນະ**

ການອອກໃບອະນຸຍາດ ທາງດ້ານເຕັກນິກນໍາເຂົ້າຍານພາຫະນະ ປະກອບມີດັ່ງນີ້:

1. ຜູ້ນໍາເຂົ້າຍານພາຫະນະ ຕ້ອງເຮັດໜັງສືສະເໜີ ເຖິງຂະແໜງໂຍທາທິການ ແລະ ຂົນສົ່ງ ໂດຍຄັດຕິດ ໃບອະນຸຍາດນໍາເຂົ້າຍານພາຫະນະ ທີ່ອອກ ໂດຍຂະແໜງອຸດສາຫະກໍາ ແລະ ການຄ້າ.

2. ພາຍຫຼັງ ໄດ້ຮັບໜັງສືສະເໜີແລ້ວ ຂະແໜງໂຍທາທິການ ແລະ ຂົນສົ່ງ ຕ້ອງພິຈາລະນາ ອອກໃບອະນຸຍາດທາງດ້ານເຕັກນິກ ພາຍໃນ..... ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານ.

3. ກໍລະນີ ບໍ່ສາມາດອອກໃບອະນຸຍາດ ທາງດ້ານເຕັກນິກໄດ້ ຂະແໜງໂຍທາທິການ ແລະ ຂົນສົ່ງ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພາຍໃນ ..... ລັດຖະການ ນັບແຕ່ມື້ໄດ້ຮັບເອກະສານ.

**ມາດຕາ 46 ຂັ້ນຕອນການອອກໃບຢັ້ງຢືນທາງດ້ານເຕັກນິກ ເພື່ອຂຶ້ນທະບຽນສໍາລັບພາຫະນະ ທີ່ຜະລິດ-ປະກອບ ໃນ ສປປ ລາວ.**

ການອອກໃບຢັ້ງຢືນທາງດ້ານເຕັກນິກ ເພື່ອຂຶ້ນທະບຽນສໍາລັບພາຫະນະ ທີ່ຜະລິດ ແລະ/ຫຼື ປະກອບ ໃນ ສປປ ລາວ ໃຫ້ປະຕິບັດດັ່ງນີ້:

1. ບໍລິສັດຜູ້ນໍາເຂົ້າ ເຮັດໜັງສືສະເໜີ ຕໍ່ຂະແໜງການ ໂຍທາທິການ ແລະ ຂົນສົ່ງ ເພື່ອພິຈາລະນາ;
2. ຂະແໜງການ ໂຍທາທິການ ແລະ ຂົນສົ່ງ ອອກໃບຢັ້ງຢືນທາງດ້ານເຕັກນິກ ເພື່ອຂຶ້ນທະບຽນສໍາລັບຍານພາຫະນະ ທີ່ປະກອບໃນ ສປປ ລາວ;
3. ກ່ອນການນໍາເຂົ້າ ຜູ້ນໍາເຂົ້າ ຕ້ອງເສຍພາສີອາກອນຕາມລະບຽບການກ່ອນ ຈຶ່ງສາມາດນໍາເຂົ້າໄດ້.

**ມາດຕາ 47 ຂັ້ນຕອນການອອກໃບຢັ້ງຢືນທາງດ້ານເຕັກນິກ ເພື່ອຂຶ້ນທະບຽນສໍາລັບຍານພາຫະນະ ທີ່ປະກອບ ໃນ ສປປ ລາວ**

ການອອກໃບຢັ້ງຢືນທາງດ້ານເຕັກນິກ ເພື່ອຂຶ້ນທະບຽນສໍາລັບຍານພາຫະນະ ທີ່ປະກອບໃນ ສ ປປ ລາວ ຕ້ອງປະຕິບັດດັ່ງນີ້:

1. ບໍລິສັດນໍາເຂົ້າເຮັດໜັງສື ຕໍ່ຂະແໜງການ ໂຍທາທິກາ ແລະ ຂົນສົ່ງ ເພື່ອຂໍອະນຸຍາດນໍາໃຊ້ ເຄື່ອງຈັກ ສັບເລກຈັກ, ເລກຖັງ;

2. ຂະແໜງການ ໂຍທາທິການ ແລະ ຂົນສົ່ງ ພິຈາລະນາ ອອກໃບອະນຸຍາດ ນໍາໃຊ້ເຄື່ອງຈັກສັບ ເລກຈັກ-ເລກຖັງ;

***3.*** ບໍລິສັດນໍາເຂົ້າເຮັດໜັງສື ຕໍ່ຂະແໜງການໂຍທາທິການ ແລະ ຂົນສົ່ງ ເພື່ອສະເໜີແຕ່ງຕັ້ງ ວິຊາການລົງກວດກາ ຍານພາຫະນະຕົວຈິງ ທີ່ປະກອບແລ້ວ;

4. ພາຍຫຼັງຜ່ານ ການກວດກາຕົວຈິງ ຂະແໜງການ ໂຍທາທິການ ແລະ ຂົນສົ່ງ ຕ້ອງອອກ ອະນຸຍາດບັນຊີຍານພາຫະນະ ທີ່ປະກອບແລ້ວ ຕາມການກວດກາຕົວຈິງ ແລະ ອອກໃບຢັ້ງຢືນທາງດ້ານເຕັກນິກ ເພື່ອຂຶ້ນທະບຽນສໍາລັບຍານພາຫະນະ ທີ່ປະກອບໃນ ສ ປປ ລາວ.

**ມາດຕາ 48 ອາຍຸ ແລະ ການຕໍ່ອາຍຸໃບອະນຸຍາດທາງດ້ານເຕັກນິກ ນໍາຍານພາຫະນະ ກົນຈັກເຂົ້າ ແລະ ຂຶ້ນທະບຽນ ຢູ່ ສ ປປ ລາວ**

ໃບອະນຸຍາດທາງດ້ານເຕັກນິກ ນໍາຍານພາຫະນະ ກົນຈັກເຂົ້າ ແລະ ຂຶ້ນທະບຽນ ມີອາຍຸການນໍາໃຊ້ ສາມສິບວັນ ພາຍຫຼັງອອກອະນຸຍາດ ແລະ ສາມາດຕໍ່ໄດ້ 1 ຄັ້ງ.

ສໍາລັບນໍາເຂົ້າເພື່ອຮັບໃຊ້ໂຄງການ, ອົງການຈັດຕັ້ງສາກົນ, ສະຖານທູດ, ສະຖາບັນການເງິນສາກົນ ທີ່ໄດ້ຮັບການຍົກເວັ້ນພາສີ-ອາກອນຈາກລັດຖະບານ ແມ່ນອາຍຸການນໍາໃຊ້ ຫົກສິບວັນ.

# ໝວດທີ 2
# ມາດຕະຖານ ແລະ ຄຸນນະພາບຊິ້ນສ່ວນຍານພາຫະນະ

**ມາດຕາ 49 ມາດຕະຖານ ຊິ້ນສ່ວນຍານພາຫະນະ**

ມາດຕະຖານຊິ້ນສ່ວນຍານພາຫະນະ ແມ່ນເງື່ອນໄຂກຳນົດດ້ານຄຸນລັກສະນະສະເພາະຂອງຍານພາຫະນະ ທີ່ຜ່ານຂະບວນການຜະລິດ ແລະ ປະກອບ, ຈັດແບ່ງປະເພດ, ຂະໜາດ, ນ້ຳໜັກ ແລະ ກຳນົດຈຸດປະສົງຂອງການນຳໃຊ້.

**ມາດຕາ 50 ຄຸນນະພາບ ຊິ້ນສ່ວນຍານພາຫະນະ**

ຊິ້ນສ່ວນຍານພາຫະນະທີ່ນຳມາປະກອບເປັນຍານພາຫະນະຢູ່ໃນໂຮງງານ ຕ້ອງໄດ້ຮັບການກວດກາຄຸນນະພາບ ແລະ ຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ. ໃນກໍລະນີຊິ້ນສ່ວນຍານພາຫະນະ ທີ່ມີຜົນຕໍ່ຄວາມ ປອດໄພ ຫຼື ລະບົບປະສິດທິພາບຂອງຍານພາຫະນະ ຕ້ອງໄດ້ຮັບການກວດກາ, ກວດສອບດ້ານຄຸນນະພາບ ຈາກຫ້ອງທົດລອງ ແລະ ໄດ້ຮັບໃບຢັ້ງຢືນຄຸນນະພາບຂອງຜະລິດຕະພັນ ຈາກອົງການທີ່ສາກົນຮັບຮອງຢູ່ ພາຍໃນ ຫລື ຕ່າງປະເທດ.

**ມາດຕາ 51 ຮູບແບບຊິ້ນສ່ວນຍານພາຫະນະ**

ຮູບແບບຊິ້ນສ່ວນ ເພື່ອນຳເຂົ້າ, ຜະລິດ ແລະ/ຫຼື ປະກອບເປັນຍານພາຫະນະຢູ່ໂຮງງານ ຜະລິດ-ປະກອບ ຍານພາຫະນະ ປະກອບມີ 3 ຮູບແບບ ຄື: ເອັສເຄດີ (SKD); ຊີເຄດີ (CKD) ແລະ ໄອເຄດີ (IKD).

**ມາດຕາ 52 ໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະໃນໂຮງງານ**

ໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ການປະກອບຍານພາຫະນະໃນໂຮງງານ ແມ່ນເອກະສານຢັ້ງຢືນຂະບວນການຜະລິດ ຫລື ການປະກອບພາຍໃນໂຮງງານ ໂດຍການກຳນົດລາຍການຊິ້ນສ່ວນທີ່ ສາມາດຜະລິດ ຫຼື ລາຍການຊິ້ນສ່ວນທີ່ນຳມາປະກອບໃນໂຮງງານ.

**ມາດຕາ 53 ເງື່ອນໄຂການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະໃນໂຮງງານ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ດຳເນີນກິດຈະການ ການຜະລິດ ແລະ/ຫຼື ປະກອບຍານພາຫະນະ ຢູ່ ສປປລາວ ຕ້ອງສະເໜີຕໍ່ຂະແໜງອຸດສາຫະກຳ ແລະການຄ້າ ເພື່ອອອກໃບຢັ້ງຢືນໂດຍສອດຄ່ອງຕາມເງື່ອນໄຂ ດັ່ງນີ້:

1. ມີໃບຢັ້ງຢືນດຳເນີນກິດຈະການໂຮງງານ ທີ່ຍັງບໍ່ທັນໝົດອາຍຸ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ;
2. ມີເຄື່ອງຈັກ-ອຸປະກອນ ແລະ ຂະບວນການ ເພື່ອຜະລິດຊິ້ນສ່ວນ ຫຼື ປະກອບຍານພາຫະນະ ທີ່ຖືກຕ້ອງ ແລະ ແທດເໝາະ ຕາມມາດຕະຖານເຕັກນິກຂອງການຜະລິດ ແລະ ການປະກອບຊິ້ນສ່ວນຍານພາຫະນະ.

**ມາດຕາ 54 ການປະກອບເອກະສານສະເໜີອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະ**

ການສະເໜີອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ /ຫຼື ປະກອບຍານພາຫະນະ ໃຫ້ປະກອບ

ເອກະສານດັ່ງນີ້:

1. ໃບສະເໜີຕາມແບບພິມທີ່ຂະແໜງອຸດສາຫະກຳ ແລະ ການຄ້າໄດ້ກຳນົດ;
2. ໃບຢັ້ງຢືນດຳເນີນກິດຈະການໂຮງງານ;
3. ມີລາຍການບັນຊີຊິ້ນສ່ວນພາຫະນະທີ່ ຈະຜະລິດ ແລະ/ຫຼື ຈະນຳມາປະກອບຢູ່ໂຮງງານ
4. ໃບຢັ້ງຢືນຊັບສິນທາງປັນຍາ ຫຼື ໃບມອບສິດຈາກບໍລິສັດແມ່.

**ມາດຕາ 55 ຂັ້ນຕອນການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະໃນໂຮງງານ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນຕາມທີ່ກຳນົດໄວ້ໃນມາດຕາ 54 ຂອງດຳລັດສະບັບນີ້ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງລົງກວດກາ, ເຮັດບົດບັນທຶກ ພາຍໃນ 10 ວັນລັດຖະການ ໂດຍມີການສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ;

ຖ້າເຫັນວ່າຄຳຮ້ອງ ແລະ ເອກະສານປະກອບຫາກມີເນື້ອໃນບໍ່ຖືກຕ້ອງແລະບໍ່ຄົບຖ້ວນ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນ .... ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານ ເພື່ອໃຫ້ຜູ້ຮ້ອງ ຂໍແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ;

ໃນກໍລະນີບໍ່ສາມາດອອກບໍ່ໃບຢັ້ງຢືນໄດ້ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ຮ້ອງຂໍ ພາຍໃນ .... ວັນລັດຖະການນັບແຕ່ໄດ້ຮັບເອກະສານເປັນຕົ້ນໄປ;

ຖ້າເຫັນວ່າເອກະສານຄົບຖ້ວນ, ຖືກຕ້ອງ ແລະ ໄດ້ຜ່ານການກວດກາແລ້ວ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະຂອງໂຮງງານ ຕ້ອງໃຫ້ສາເລັດພາຍໃນຫ້າວັນລັດຖະການ ນັບແຕ່ໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 56 ອາຍຸ ແລະ ການຕໍ່ອາຍຸຂອງໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະ**

ໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອນຍານພາຫະນະໃນໂຮງງານ ມີອາຍຸຫນຶ່ງ ປີ ແລະ ສາມາດຕໍ່ໄດ້.

ກ່ອນໃບຢັ້ງຢືນຈະໝົດອາຍຸ ສາມສິບວັນ ໂຮງງານ ຫລື ບໍລິສັດ ສະເໜີມາຍັງກະຊວງອຸດສາຫະກຳ ແລະ ການຄ້າ (ກົມອຸດສາຫະກຳ ແລະ ຫັດຖະກຳ), ປະກອບເອກະສານຕ່າງໆ ທີ່ກ່ຽວຂ້ອງ ແລະ ປະຕິບັດຕາມຂັ້ນຕອນການອອກໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະ ຕາມທີ່ກຳນົດໄວ້ໃນມາດຕາ 54 ແລະ 55 ຂອງດາລັດສະບັບນີ້.

ໃນກໍລະນີມີການປ່ຽນແປງຂະບວນການຜະລິດ ແລະ ປະກອບພາຫະນະ, ເພີ່ມ ຫຼື ຫຼຸດ ຈຳນວນລາຍການຊິ້ນສ່ວນ ທີ່ຜະລິດ ຫລື ປະກອບຢູ່ໂຮງງານ ເຈົ້າຂອງໂຮງງານ, ບໍລິສັດ ຕ້ອງເຮັດໜັງສືສະເໜີມາຍັງກົມອຸດສາຫະກຳ ແລະ ຫັດຖະກຳ ເພື່ອຄົ້ນຄວ້າພິຈາລະນາດັດແກ້ໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະ.

ການຈັດຕັ້ງປະຕິບັດ ໃຫ້ປະຕິບັດຄືກັນກັບການຂໍໃບຢັ້ງຢືນ ຕາມທີ່ກຳນົດໄວ້ໃນມາດຕາ 54 ແລະ 55 ຂອງດຳລັດສະບັບນີ້.

**ມາດຕາ 57 ການປ່ຽນແປງລາຍການ ການຜະລິດ ແລະ ຊິ້ນສ່ວນປະກອບ**

ການປ່ຽນແປງລາຍການ ການຜະລິດ ແລະ ຊິ້ນສ່ວນປະກອບຍານພາຫະນະ ແມ່ນ ໃຫ້ເຈົ້າຂອງໂຮງງານ, ບໍລິສັດເຮັດໜັງສືສະເໜີມາຍັງ ກົມອຸດສາຫະກຳ ແລະ ຫັດຖະກຳ ເພື່ອຄົ້ນຄວ້າພິຈາລະນາດັດແກ້ ໃບຢັ້ງຢືນລາຍການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະ.

## ພາກທີ V
## ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດຍານພາຫະນະ

**ມາດຕາ 58 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດການນຳເຂົ້າ ແລະ ສົ່ງອອກຍານພາຫະນະ**

ບໍລິສັດນຳເຂົ້າແລະສົ່ງອອກຍານພາຫະນະ ມີສິດ ດັ່ງນີ້:

1. ນຳເຂົ້າຍານພາຫະນະທີ່ຕົນເປັນຕົວແທນ ແລະ ພາຫະນະທີ່ຍັງບໍ່ທັນມີຕົວແທນຈຳໜ່າຍຢູ່ ສປປ ລາວ ເພື່ອຈຳໜ່າຍໃຫ້ແກ່ລູກຄ້າຂອງຕົນ, ສົ່ງອອກ, ສົ່ງອອກຕໍ່ ແລະ ນຳເຂົ້າຜ່ານແດນ;
2. ຊື້ຍານພາຫະນະຈາກຜູ້ຜະລິດ-ປະກອບຢູ່ພາຍໃນ ເພື່ອຈຳໜ່າຍ ຫຼື ສົ່ງອອກ;
3. ຂາຍ ຫຼື ແລກປ່ຽນ ຍານພາຫະນະກັບລູກຄ້າຂອງຕົນ;
4. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນໃນການດຳເນີນທຸລະກິດຍານພາຫະນະ;
5. ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ບໍລິສັດນຳເຂົ້າ ແລະ ສົ່ງອອກຍານພາຫະນະ ມີພັນທະດັ່ງນີ້:

1. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ;
2. ຮັບປະກັນທາງດ້ານຄຸນນະພາບ,ມາດຕະຖານ-ເຕັກນິກຂອງພາຫະນະທີ່ນຳເຂົ້າ ແລະ ຈຳໜ່າຍ;
3. ໃຫ້ບໍລິການຫຼັງການຂາຍແກ່ລູກຄ້າຂອງຕົນ;
4. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດໃນການກວດກາການເຄື່ອນໄຫວທຸລະກິດ ຍານພາຫະນະ
5. ເສຍພາສີ, ອາກອນ ແລະ ພັນທະອື່ນໃຫ້ລັດຕາມກົດໝາຍ;
6. ລາຍງານການນຳເຂົ້າ, ການຈຳໜ່າຍຍານພາຫະນະປະຈຳງວດ ແລະ ປີ ໃຫ້ຂະແໜງອຸດສາ ຫະກຳ ແລະ ການຄ້າ;
7. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 59 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດການຈຳໜ່າຍຍານພາຫະນະ**

ບໍລິສັດຈຳໜ່າຍຍານພາຫະນະ ມີສິດ ດັ່ງນີ້:

1. ຊື້ ຫຼື ເປັນຕົວແທນຈຳໜ່າຍຍານພາຫະນະໃຫ້ແກ່ບໍລິສັດນຳເຂົ້າ ແລະ ສົ່ງອອກ, ຜູ້ຜະລິດ-ປະກອບພາຍໃນ ເພື່ອຈຳໜ່າຍ ຫຼື ສົ່ງອອກ;
2. ຂາຍ ຫຼື ແລກປ່ຽນ ຍານພາຫະນະກັບລູກຄ້າຂອງຕົນ;
3. ຊື້, ຂາຍ ຫຼື ແລກປ່ຽນ ຍານພາຫະນະທີ່ຜ່ານການນຳໃຊ້ແລ້ວ;
4. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນໃນການດຳເນີນທຸລະກິດຍານພາຫະນະ;
5. ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ບໍລິສັດຈຳໜ່າຍຍານພາຫະນະມີພັນທະດັ່ງນີ້:

1. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ;

2. ໃຫ້ບໍລິການຫຼັງການຂາຍແກ່ລູກຄ້າຂອງຕົນ;
3. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດໃນການກວດກາການເຄື່ອນໄຫວທຸລະກິດຍານພາຫະນະ;
4. ເສຍພາສີ, ອາກອນແລະພັນທະອື່ນໃຫ້ລັດຕາມກົດໝາຍ;
5. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 60 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດການຜະລິດ-ປະກອບຍານພາຫະນະ**

ທຸລະກິດການຜະລິດ-ປະກອບຍານພາຫະນະ ມີສິດ ດັ່ງນີ້:

1. ນຳເຂົ້າຊິ້ນສ່ວນ ຫຼື ວັດຖຸດິບ ເພື່ອມາຜະລິດ-ປະກອບ ຢູ່ໃນໂຮງງານຂອງຕົນ;
2. ຈຳໜ່າຍ ໃຫ້ຜູ້ດຳເນີນທຸລະກິດຍານພາຫະນະຢູ່ພາຍໃນ ແລະ ສົ່ງອອກຕ່າງປະເທດ;
3. ໄດ້ຮັບຂໍ້ມູນຂ່າວສານທີ່ຈຳເປັນໃນການດຳເນີນທຸລະກິດຍານພາຫະນະ;
4. ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ທຸລະກິດການຜະລິດ-ປະກອບຍານພາຫະນະມີພັນທະດັ່ງນີ້:

1. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ;
2. ໃຫ້ບໍລິການຫຼັງການຂາຍແກ່ລູກຄ້າຂອງຕົນ;
3. ເກັບຊື້ຄືນ ຍານພາຫະນະທີ່ບໍ່ໄດ້ຄຸນນະພາບ ແລະ ມາດຕະຖານ ທີ່ໄດ້ກຳນົດໄວ້ຕາມລະບຽບການ;
4. ໃຫ້ຄວາມຮ່ວມມືກັບເຈົ້າໜ້າທີ່ຂອງລັດໃນການກວດກາການເຄື່ອນໄຫວທຸລະກິດຍານພາຫະນະ;
5. ເສຍພາສີ, ອາກອນແລະພັນທະອື່ນໃຫ້ລັດຕາມກົດໝາຍ;
6. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ VI
## ສະມາຄົມອຸດສາຫະກຳຍານພາຫະນະ

**ມາດຕາ 61 ສະມາຄົມອຸດສາຫະກຳຍານພາຫະນະ**

ສະມາຄົມອຸດສາຫະກຳຍານພາຫະນະ ແມ່ນອົງການຈັດຕັ້ງສັງຄົມທີ່ບໍ່ຫວັງຜົນກຳໄລ ຊຶ່ງສ້າງຕັ້ງຂຶ້ນເພື່ອເຕົ້າໂຮມ ເອົາບັນດາຫົວໜ່ວຍທຸລະກິດ ຍານພາຫະນະປະເພດບໍລິສັດນຳເຂົ້າ ແລະ ສົ່ງອອກ ຍານພາຫະນະ, ບໍລິສັດ ຈຳໜ່າຍຍານພາຫະນະ, ບໍລິສັດໃຫ້ເຊົ່າພາຫະນະຂົນສົ່ງ ແລະ ບໍລິສັດບໍລິການຂົນສົ່ງ ຍານພາຫະນະມີພາລະ ບົດບາດປະສານສົມທົບກັບອົງການຄຸ້ມຄອງທຸລະກິດຍານພາຫະນະ, ໃຫ້ການຊ່ວຍເຫຼືອ, ໃຫ້ຄຳປຶກສາ, ໃຫ້ຄຳແນະນຳ, ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງສະມາຊິກ.

ຫົວໜ່ວຍທຸລະກິດຍານພາຫະນະຕ້ອງເປັນສະມາຊິກ ຂອງສະມາຄົມອຸດສາຫະກຳຍານພາຫະນະ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງສະມາຄົມອຸດສາຫະກຳຍານພາຫະນະ**

ສະມາຄົມອຸດສາຫະກຳຍານພາຫະນະມີສິດ ແລະ ໜ້າທີ່ດັ່ງນີ້:

1. ເຜີຍແຜ່ນິຕິກຳ ແລະ ຂໍ້ມູນຂ່າວສານທຸລະກິດຍານພາຫະນະໃຫ້ສະມາຊິກ;
2. ຄົ້ນຄວ້າ ແລະ ນຳສະເໜີຄຳເຫັນກ່ຽວກັບການສ້າງ ແລະ ປັບປຸງນິຕິກຳ ສະເໜີຕໍ່ອົງການຄຸ້ມຄອງທຸລະກິດຍານພາຫະນະ;
3. ຢັ້ງຢືນແຜນການນຳເຂົ້າ ແລະ ສົ່ງອອກ ແລະ ຈຳໜ່າຍຍານພາຫະນະ ປະຈຳປີຂອງບໍລິສັດນຳເຂົ້າ ສົ່ງອອກ ແລະ ຈຳໜ່າຍຍານພາຫະນະ ກ່ອນນຳສະເໜີຕໍ່ອົງການຄຸມຄອງຍານພາຫະນະພິຈາລະນາ;
4. ເປັນຂົວຕໍ່ລະຫວ່າງອົງການຄຸ້ມຄອງທຸລະກິດຍານພາຫະນະ ແລະ ສະມາຊິກ;

5.  ໄດ້ຮັບຂໍ້ມູນຈາກສະມາຊິກ ຂອງ ສະມາຄົມ ແລະ ອົງການຄຸ້ມຄອງທຸລະກິດຍານພາຫະນະ;

6.  ຕິດຕາມການເຄື່ອນໄຫວຂອງສະມາຊິກໃຫ້ຖືກຕ້ອງ ແລະສອດຄ່ອງຕາມກົດໝາຍ ແລະ ລະບຽບການ;

7. ໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂຶ້ນລະຫວ່າງສະມາຊິກດ້ວຍກັນ;

8. ສະເໜີຍ້ອງຍໍສະມາຊິກທີ່ມີຜົນງານດີເດັ່ນໃນການເຄື່ອນໄຫວທຸລະກິດ,ປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ;

9. ສັງລວມ ແລະ ລາຍງານການນໍາເຂົ້າ,ສົ່ງອອກ ແລະ ຈໍາໜ່າຍຍານພາຫະນະປະຈໍາປີ ຕໍ່ອົງການ ຄຸ້ມຄອງທຸລະກິດຍານພາຫະນະ;

10.ນໍາໃຊ້ສິດ ແລະ  ໜ້າທີ່ອື່ນ ຕາມທີ່ການົດໄວ້ໃນກົດໝາຍ ແລະ ລະບຽບການອື່ນ.

**ມາດຕາ 63 ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມອຸດສາຫະກໍາຍານພາຫະນະ**

ສໍາລັບໂຄງປະກອບ ແລະ ການຈັດຕັ້ງ ຂອງສະມາຄົມທຸລະກິດອຸດສາຫະກໍາຍານພາຫະນະ ລວມທັງ ລະບອບ ແບບແຜນວິທີເຮັດວຽກໄດ້ກໍານົດໄວ້ໃນກົດລະບຽບຂອງສະມາຄົມ ທີ່ໄດ້ຜ່ານການຮັບຮອງຈາກສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ ແລະ ໄດ້ຮັບການອະນຸມັດຈາກອົງການຄຸ້ມຄອງທຸລະກິດຍານພາຫະນະ.

## ພາກທີ VII
## ຂໍ້ຫ້າມ

**ມາດຕາ 64 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1.  ສ້າງອຸປະສັກກີດຂວາງ  ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດທີ່ກ່ຽວຂ້ອງ  ໃນການປະຕິບັດວຽກງານຄຸ້ມຄອງທຸລະກິດຍານພາຫະນະ;

1.  ດໍາເນີນທຸລະກິດຍານພາຫະນະໂດຍບໍ່ໄດ້ຮັບອະນຸຍາດ;

2.  ໃຫ້ການຊ່ວຍເຫຼືອ, ປົກປ້ອງຜູ້ລະເມີດ;

3.  ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;

4.  ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 65 ຂໍ້ຫ້າມສາລັບຜູ້ດາເນີນທຸລະກິດການນາເຂົ້າ, ສົ່ງອອກແລະຈໍາໜ່າຍຍານພາຫະນະ**

ຫ້າມຜູ້ດາເນີທຸລະກິດການນາເຂົ້າ, ສົ່ງອອກ ແລະ ຈາໜ່າຍຍານພາຫະນະ ມີພຶດຕິກາດັ່ງນີ້:

1. ນໍາເຂົ້າ, ສົ່ງອອກ ແລະ ຈໍາໜ່າຍພາຫະນະ ທີ່ບໍ່ໄດ້ມາດຕະຖານ;

2. ນໍາເຂົ້າ, ສົ່ງອອກ ແລະ ຈໍາໜ່າຍພາຫະນະ ໂດຍບໍ່ໄດ້ເສຍພັນທະ ຫຼື ເສຍພັນທະບໍ່ຄົບຖ້ວນ;

3. ນໍາເຂົ້າ ແລະ ສົ່ງອອກຍານພາຫະນະໂດຍບໍ່ໄດ້ຜ່ານສາງ;

4. ມອບສິດໃຫ້ບໍລິສັດຈໍາໜ່າຍຍານພາຫະນະພາຍໃນ ຫຼື ບຸກຄົນໃດໜຶ່ງນໍາເຂົ້າ ແລະ ສົ່ງອອກຍານພາຫະນະ;

5. ເອົາໃບທະບຽນວິສາຫະກິດ ແລະ ໃບຢັ້ງຢືນການເຄື່ອນໄຫວດໍາເນີນທຸລະກິດຂອງບໍລິສັດນໍາເຂົ້າ ແລະ ສົ່ງອອກຍານພາຫະນະໃຫ້ບຸກຄົນອື່ນນໍາໃຊ້;

6. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 66 ຂໍ້ຫ້າມສໍາລັບຜູ້ດໍາເນີນທຸລະກິດ ຜະລິດ-ປະກອບຍານພາຫະນະ**

ຫ້າມຜູ້ດໍາເນີນທຸລະກິດ ຜະລິດ-ປະກອບຍານພາຫະນະ ມີພຶດຕິກໍາດັ່ງນີ້:

1. ສ້າງຕັ້ງ, ໂຍກຍ້າຍ ແລະ ດໍາເນີນການຜະລິດ ຊິ້ນສ່ວນ ແລະ ປະກອບຍານພາຫະນະໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;

2. ເຄື່ອນໄຫວ ກິດຈະການໂດຍບໍ່ສອດຄ່ອງກັບໃບຢັ້ງຢືນການຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະໃນໂຮງງານ;

3. ຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະໂດຍບໍ່ໄດ້ມາດຕະຖານ;

4. ຜະລິດຊິ້ນສ່ວນ ແລະ ປະກອບຍານພາຫະນະໂດຍບໍ່ໄດ້ເສຍພັນທະ ຫຼື ເສຍພັນທະບໍ່ຄົບຖ້ວນ;

5. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 67 ຂໍ້ຫ້າມສໍາລັບເຈົ້າໜ້າທີ່-ພະນັກງານ**

ຫ້າມເຈົ້າໜ້າທີ່- ພະນັກງານ ມີພຶດຕິກາດັ່ງນີ້:

1. ສວຍໃຊ້ອໍານາດ, ຕໍາແໜ່ງ,ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ;
2. ບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງຕໍ່ຜູ້ດໍາເນີນທຸລະກິດຍານພາຫະນະ;
3. ກົດໜ່ວງຖ່ວງດຶງ ຫຼື ແກ່ຍາວເວລາໃນການພິຈາລະນາເອກະສານ;
4. ປະລະໜ້າທີ່, ຂາດຄວາມຮັບຜິດຊອບ ແລະ ບິດເບືອນຄວາມຈິງ;
5. ປົດບັງ,ປົກປ້ອງ ແລະ ໃຫ້ຄວາມຮ່ວມມືແກ່ຜູ້ກະທໍາຄວາມຜິດ;
6. ປອມແປງເອກະສານ ຫຼື ໃຊ້ເອກະສານປອມແປງ, ເປີດເຜີຍຄວາມລັບທຸລະກິດໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ດໍາເນີນທຸລະກິດທີ່ກ່ຽວຂ້ອງ;
7. ອະນຸຍາດເຄື່ອນໄຫວທຸລະກິດຍານພາຫະນະ ໂດຍບໍ່ຖືກຕ້ອງຕາມເງື່ອນໄຂ ແລະ ຂັ້ນຕອນ;
8. ມີພຶດຕິກໍາອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

ຂໍ້ຫ້າມສະມາຄົມອຸດສາຫະກໍາຍານພາຫະນະ

# ພາກທີ VIII
# ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 68 ຮູບການແກ້ໄຂຂໍ້ຂັດແຍ່ງ**

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບທຸລະກິດຍານພາຫະນະ ສາມາດດໍາເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ;
5. ການແກ້ໄຂຂໍ້ຂັດແຍ່ງສາກົນ.

**ມາດຕາ 69 ການປະນີປະນອມ**

ໃນກໍລະນີມີຂໍ້ຂັດແຍ່ງກ່ຽວກັບທຸລະກິດຍານພາຫະນະ ຄູ່ກໍລະນີສາມາດແກ້ໄຂຂໍ້ຂັດແຍ່ງດັ່ງກ່າວດ້ວຍ ການປຶກສາຫາລື ແລະ ປະນີປະນອມກັນ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ.

ຄູ່ກໍລະນີສາມາດປະນີປະນອມກັນກ່ຽວກັບການລະເມີດສິດຜົນປະໂຫຍດທາງທຸລະກິດຍານພາຫະນະ.

ການຕົກລົງຈາກການປະນີປະນອມໃຫ້ປະຕິບັດຕາມຫຼັກການຂອງການເຮັດສັນຍາ ຕາມທີ່ກຳນົດໄວ້ປະມວນກົດໝາຍແພ່ງ.

**ມາດຕາ 70 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບທຸລະກິດຍານພາຫະນະ ທີ່ມີລັກສະນະທາງດ້ານບໍລິຫານ ຊຶ່ງຢູ່ພາຍໃຕ້ ຄວາມຮັບຜິດຊອບຂອງອົງການຄຸ້ມຄອງວຽກງານທຸລະກິດຍານພາຫະນະ ຄູ່ກໍລະນີມີສິດສະເໜີຕໍ່ອົງການຈັດຕັ້ງດັ່ງກ່າວເພື່ອແກ້ໄຂ.

ຄູ່ກໍລະນີສາມາດສະເໜີຕໍ່ອົງການຄຸ້ມຄອງວຽກງານທຸລະກິດຍານພາຫະນະເພື່ອແກ້ໄຂຂໍ້ຂັດແຍ່ງກ່ຽວກັບທຸລະກິດຍານພາຫະນະ ໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການ.

**ມາດຕາ 71 ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບທຸລະກິດຍານພາຫະນະ ຄູ່ກໍລະນີມີສິດສະເໜີຕໍ່ອົງການແກ້ໄຂ ຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ.

**ມາດຕາ 72 ການຮ້ອງຟ້ອງຕໍ່ສານປະຊາຊົນ**

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບທຸລະກິດຍານພາຫະນະຄູ່ກໍລະນີສາມາດຮ້ອງຟ້ອງຕໍ່ສານປະຊາຊົນເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ມາດຕາ 73 ການແກ້ໄຂຂໍ້ຂັດແຍ່ງສາກົນ**

ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບທຸລະກິດຍານພາຫະນະທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສັນຍາ ສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

## ພາກທີ IX
## ການຄຸ້ມຄອງ ແລະ ກວດກາ
## ໝວດທີ 1
## ການຄຸ້ມຄອງທຸລະກິດຍານພາຫະນະ

**ມາດຕາ 74 ອົງການຄຸ້ມຄອງທຸລະກິດຍານພາຫະນະ**

ລັດຖະບານຄຸ້ມຄອງທຸລະກິດຍານພາຫະນະຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງໂຍທາທິການ ແລະ ຂົນສົ່ງ ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບ ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

**ມາດຕາ 75 ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະການຄ້າ**

ໃນການຄຸ້ມຄອງທຸລະກິດຍານພາຫະນະ ຂະແໜງການອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ,ສ້າງນະໂຍບາຍ,ນິຕິກຳແລະມາດຕະການກ່ຽວກັບການຄຸ້ມຄອງທຸລະກິດຍານພາຫະນະເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ນິຕິກຳ ແລະ ມາດຕະການກ່ຽວກັບການຄຸ້ມຄອງທຸລະກິດຍານພາຫະນະ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະ ສັງຄົມ ຢ່າງທົ່ວເຖິງ;

3. ພິຈາລະນາການສະເໜີສ້າງຕັ້ງ, ອອກໃບຢັ້ງຢືນ, ສັ່ງໂຈະ ຫຼື ຢຸດເຊົາ ການເຄື່ອນໄຫວທຸລະກິດຍານພາຫະນະ;

4. ຄົ້ນຄ້ວາ ແລະ ນຳສະເໜີລັດຖະບານພິຈາລະນາຮັບຮອງແຜນການນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍຍານພາຫະນະປະຈຳປີ;

5. ພິຈາລະນາອະນຸຍາດການນຳເຂົ້າຍານພາຫະນະຕາມແຜນການນຳເຂົ້າທີ່ລັດຖະບານໄດ້ຮັບຮອງ;

6. ສົມທົບກັບກະຊວງໂຍທາທິການ ແລະ ຂົນສົ່ງ ຄົ້ນຄວ້າ ແລະ ອອກລະບຽບການກ່ຽວກັບການນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍຍານພາຫະນະ;

7. ປະສານສົມທົບກັບຂະແໜງການກ່ຽວຂ້ອງຄົ້ນຄວ້າ ແລະ ນຳສະເໜີລັດຖະບານ ເພື່ອກຳນົດ ແລະ ດັດສົມບໍລິສັດນຳເຂົ້າ-ສົ່ງອອກ ແລະ ຈຳໜ່າຍຍານພາຫະນະ ໃຫ້ເໝາະສົມຕາມສະພາບການພັດທະນາ ເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

8. ຝຶກອົບຮົມ ແລະ ອອກໃບຢັ້ງຢືນການຄຸ້ມຄອງທຸລະກິດຍານພາຫະນະ;

9. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີຂອງຜູ້ດຳເນີນທຸລະກິດຍານພາຫະນະ ແລະ ຜູ້ຊົມໃຊ້;

10.ຊີ້ນຳສະມາຄົມອຸດສາຫະກຳຍານພາຫະນະ ໃຫ້ເຄື່ອນໄຫວຢ່າງເປັນປົກກະຕິ;

11. ແຈ້ງໃຫ້ຂະແໜງການເງິນຮັບຊາບ ພາຍຫຼັງອະນຸຍາດນຳເຂົ້າຍານພາຫະນະ ແຕ່ລະຄັ້ງ;

12. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຸລະກິດຍານພາຫະນະໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 76 ສິດ ແລະ ໜ້າທີ່ ຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງທຸລະກິດຍານພາຫະນະ ຂະແໜງການໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ ແລະ ກົດໝາຍ ກ່ຽວກັບການ ປຸກສ້າງ, ບ່ອນຈາໜ່າຍ, ການຂົນສົ່ງຍານພາຫະນະເພື່ອສະເໜີຂັ້ນເທິງພິຈາລະນາ;

2. ໂຄສະນາ, ເຜີຍແຜ່ນະໂຍບາຍ ແລະ ກົດໝາຍ ກ່ຽວກັບການ ປຸກສ້າງ, ບ່ອນຈຳໜ່າຍ, ການຂົນສົ່ງຍານພາຫະນະໃຫ້ສັງຄົມຢ່າງທົ່ວເຖິງ;

3. ພິຈາລະນາການສະເໜີສ້າງຕັ້ງ, ອອກໃບຢັ້ງຢືນຄວາມຖືກຕ້ອງ, ສັ່ງໂຈະ ຫຼື ຢຸດເຊົາ ການອະນຸຍາດປຸກສ້າງ, ບ່ອນວາງຈຳໜ່າຍ ແລະ ຂົນສົ່ງ ຍານພາຫະນະ;

4. ຄຸ້ມຄອງ ແລະ ກວດກາການປຸກສ້າງ, ສະຖານທີ່ວາງຈາໜ່າຍ ຫຼື ການຂົນສົ່ງຍານພາຫະນະ;

5. ກຳນົດເຕັກນິກຍານພາຫະນະ ;

6. ປະສານສົມທົບ ກັບຂະແໜງການຕ່າງໆທີ່ກ່ຽວຂ້ອງກັບທຸລະກິດຍານພາຫະນະ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ການົດໄວ້ໃນກົດໝາຍ.

**ມາດຕາ 77 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ**

ຂະແໜງການກ່ຽວຂ້ອງ, ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ໃນການສົ່ງເສີມ, ສະໜັບ ສະໜູນ, ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດຍານພາຫະນະ ໂດຍປະສານສົມທົບ, ຮ່ວມມືກັບ ຂະແໜງອຸດສາຫະກຳ ແລະ ການຄ້າ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາທຸລະກິດຍານພາຫະນະ

**ມາດຕາ 78 ອົງການກວດກາທຸລະກິດຍານພາຫະນະ**

ອົງການກວດກາທຸລະກິດຍານພາຫະນະ ປະກອບດ້ວຍ:

1. ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງທຸລະກິດຍານພາຫະນະ ທີ່ໄດ້ກຳນົດໄວ້ມາດຕາ 75 ຂອງດຳລັດສະບັບນີ້;

2. ອົງການກວດກາພາຍນອກ ແມ່ນ ສະພາແຫ່ງຊາດ, ອົງການກວດກາລັດ, ອົງການກວດສອບ ແຫ່ງລັດເປັນຜູ້ກວດກາການຈັດຕັ້ງປະຕິບັດວຽກງານຄຸ້ມຄອງທຸລະກິດຍານພາຫະນະ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 79 ເນື້ອໃນກວດກາ**

ການກວດກາການຄຸ້ມຄອງທຸລະກິດຍານພາຫະນະ ມີເນື້ອໃນດັ່ງນີ້:

1. ປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບ ການຄຸ້ມຄອງທຸລະກິດຍານພາຫະນະ;

2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງທຸລະກິດຍານພາຫະນະ;

3. ການເຄື່ອນໄຫວຂອງເຈົ້າໜ້າທີ່, ພະນັກງານ ແລະ ການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານຄຸ້ມຄອງທຸລະກິດຍານພາຫະນະ.

**ມາດຕາ 80 ຮູບການກວດກາ**

ການກວດກາວຽກງານຄຸ້ມຄອງທຸລະກິດພາຫະນະມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນການກວດກາຕາມແຜນການ ແລະ ມີກຳນົດເວລາ ອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍສອງຄັ້ງ ຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມ ຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນລ່ວງໜ້າ.

ການກວດກາ ໃຫ້ດຳເນີນດ້ວຍການກວດກາທາງດ້ານເອກະສານ ແລະ ລົງກວດກາຕົວຈິງ ຢູ່ສະຖານທີ່ກ່ຽວຂ້ອງ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ພາກທີ X
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 81 ນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນຫຼືການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ຮັບນະໂຍບາຍຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 82 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ,ໃຊ້ຄ່າເສັຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

**ມາດຕາ 83 ມາດຕະການ ກ່າວເຕືອນ ແລະ ສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນທີ່ລະເມີດລະບຽບການ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນດຳລັດ ສະບັບນີ້ ທີ່ມີລັກສະນະເບົາ ແລະ ເປັນການລະເມີດເທື່ອທຳອິດ ຊຶ່ງບໍ່ແມ່ນການກະທຳຜິດທາງອາຍາຈະຖືກກ່າວເຕືອນແລະສຶກສາອົບຮົມ ພ້ອມທັງເຮັດບົດບັນທຶກໄວ້.

**ມາດຕາ 84 ມາດຕະການທາງດ້ານວິໄນ**

ເຈົ້າໜ້າທີ່ ແລະ ພະນັກງານຂອງລັດທີ່ກ່ຽວຂ້ອງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມຊຶ່ງບໍ່ ເປັນການກະທຳຜິດທາງອາຍາ, ຈະຖືກລົງວິໄນຕາມທີ່ກຳນົດໄວ້ໃນກົດໝາຍ ເຊັ່ນ:

1. ກ່າວເຕືອນ ຄວາມຜິດຕາມລະບຽບການ ພ້ອມທັງບັນທຶກໄວ້ໃນສຳນວນຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ;
4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍ.

ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 85 ມາດຕະການປັບໃໝ**

ຜູ້ດຳເນີນທຸລະກິດຍານພາຫະນະທີ່ລະເມີດດາລັດສະບັບນີ້ຈະຖືກປັບໃໝຕາມກໍລະນີດັ່ງນີ້:

1. ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຍານພາຫະນະທີ່ບໍ່ໄດ້ມາດຕະຖານແຫ່ງຊາດ ຈະຖືກປັບໃໝ .......ຂອງມູນຄ່າສິນຄ້າທີ່ກວດພົບ;

2. ສະໜອງຍານພາຫະນະ ທີ່ບໍ່ໄດ້ມາດຕະຖານແຫ່ງຊາດຈະຖືກຍຶດ ແລະ ປັບໃໝ ....ຂອງມູນຄ່າສິນ ຄ້າທີ່ກວດພົບ;

3. ເອົາທະບຽນວິສາຫະກິດໃຫ້ບຸກຄົນອື່ນນາໃຊ້ ຈະຖືກປັບໃໝ...........ຕໍ່ຄັ້ງ ແລະ ບຸກຄົນອື່ນຢຸດເຊົາການນຳໃຊ້ທະບຽນນັ້ນ;

4. ນຳເຂົ້າຍານພາຫະນະໂດຍບໍ່ມີໃບຢັ້ງຢືນການເຄື່ອນໄຫວທຸລະກິດ ຈະຖືກຍຶດ ແລະ ປັບໃໝ ..... ຂອງ ມູນຄ່າສິນຄ້າທີ່ກວດພົບ

5. ການນຳເຂົ້າ, ສົ່ງອອກ ແລະ ຈາໜ່າຍ ຍານພາຫະນະໂດຍບໍ່ຖືກຕ້ອງຕາມການອະນຸຍາດຈະຖືກຍຶດ ແລະ ປັບໃໝ ...... ຂອງມູນຄ່າສິນຄ້າທີ່ກວດພົບ

**ມາດຕາ 86 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດດຳລັດສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍ ໃຫ້ແກ່ ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສຍຫາຍທີ່ຕົນກໍ່ຂຶ້ນ.

**ມາດຕາ 87 ມາດຕະການທາງອາຍາ**

ບຸກຄົນໃດທີ່ໄດ້ລະເມີດດຳລັດສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມກົດໝາຍອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

**ມາດຕາ 88 ມາດຕະການໂທດເພີ່ມ**

ນອກຈາກມາດຕະການຕໍ່ຜູ້ລະເມີດຕາມທີ່ໄດ້ກຳນົດໄວ້ໃນມາດຕາ .... ແລະ ມາດຕາ ..... ຂອງ ດຳລັດສະບັບນີ້ ຜູ້ກະທຳຜິດຍັງຈະຖືກປະຕິບັດມາດຕະການໂທດເພີ່ມ ເປັນຕົ້ນ ການໂຈະ ຫຼື ຖອນໃບ ທະບຽນວິສາຫະກິດ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 89 ການຈັດຕັ້ງປະຕິບັດ**

ມອບໃຫ້ ອົງການຄຸ້ມຄອງທຸລະກິດຍານພາຫະນະຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຈົ່ງຮັບຮູ້ ແລະໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ຕາມພາລະບົດບາດຂອງຕົນຢ່າງເຂັ້ມງວດ.

ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສົມທົບກັບກະຊວງກ່ຽວຂ້ອງ ຈັດຕັ້ງປະຕິບັດດຳລັດສະບັບນີ້.

**ມາດຕາ 90 ຜົນສັກສິດ**

ດຳລັດສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດ ທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**